SOUVANNY
Home Center

ບົດລາຍງານປະຈຳປີ

ANNUAL REPORT 2021



Call center
021-561111

ສາລະບານ

ໜ້າ

- ✓ **ສານຈາກທ່ານປະທານສະພາບໍລິຫານ** I
- ✓ **ສານຈາກ ຜູ້ອຳນວຍການໃຫຍ່**.....II
- ✓ **ພາບລວມກ່ຽວກັບທຸລະກິດ ຂອງບໍລິສັດ** 1
  - ➢ ວິໃສທັດ
  - ➢ ພາລະກິດ
  - ➢ ປະຫວັດຄວາມເປັນມາ ໂດຍຫ້ຍຂອງ ສຸວັນນີ 2-5
- ✓ **ທິບທວນຜົນການດຳເນີນງານ ປີ2021**
  - ➢ ສະພາບເສດຖະກິດສາກົນ ແລະ ເສດຖະກິດພາຍໃນປະເທດ ປີ2021.....6
  - ➢ ຜົນການເຄື່ອນໄຫວທີ່ພົ້ນເດັ່ນໂດຍຫຍໍ້ ຂອງ ບໍລິສັດ ປີ2021 6
  - ➢ ຜົນການດຳເນີນງານ ປີ2021.....7-15
- ✓ **ຂໍ້ມູນທົ່ວໄປ ແລະ ຂໍ້ມູນສຳຄັນອື່ນໆ ຂອງບໍລິສັດ 2021**
  - ➢ ທີ່ຕັ້ງ ແລະ ເຄືອຂ່າຍ.....16
  - ➢ ຕິດຕໍ່ ແລະ ພົວພັນ ສອບຖາມຂໍ້ມູນຕ່າງໆ ຂອງບໍລິສັດ.....16
- ✓ **ຂໍ້ມູນກ່ຽວກັບຫຼັກຊັບ ແລະ ຜູ້ຖືຮຸ້ນ 2021**
  - ➢ ທຶນຈົດທະບຽນ.....16
  - ➢ ຜູ້ຖືຮຸ້ນ.....16
- ✓ **ໂຄງຮ່າງການຈັດຕັ້ງສະພາບໍລິຫານ, ຄະນະອຳນວຍການ ແລະ ການເຄື່ອນໄຫວຂອງສະພາບໍລິຫານ**
  - ➢ ໂຄງຮ່າງການຈັດຕັ້ງພາຍໃນ ຂອງບໍລິສັດ 17
  - ➢ ຄະນະສະພາບໍລິຫານຂອງ ບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ.....18-19
  - ➢ ຊີວະປະຫວັດໂດຍຫຍໍ້ ຂອງຄະນະສະພາບໍລິຫານ.....20-24
  - ➢ ຄະນະຜູ້ອຳນວຍການໃຫຍ່ຂອງ ບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ.....25
  - ➢ ການເຄື່ອນໄຫວ ຂອງສະພາບໍລິຫານ.....25
  - ➢ ຄ່າຕອບແທນ ຂອງສະມາຊິກສະພາບໍລິຫານ ແລະ ຄະນະອຳນວຍການ ພາຍໃນປີ 2021.....25
- ✓ **ບົດລາຍງານດ້ານການເງິນ ຂອງບໍລິສັດ ປະຈຳປີ 2021**.....26-31
- ✓ **ຄ່າບໍລິການກວດສອບບັນຊີ ແລະ ຄ່າບໍລິການອື່ນໆ ໃນປີ 2021**.....32
- ✓ **ຄວາມຮັບຜິດຊອບຕໍ່ສັງຄົມ ປີ2021**
  - ➢ ການມອບພັນທະອາກອນ ປີ2021.....32
  - ➢ ການອຸປະຖຳ ແລະ ຊ່ວຍເຫຼືອສັງຄົມ ປີ2021.....32-34
- ✓ **ນະໂຍບາຍການພັດທະນາການຈັດການຄຸ້ມຄອງພາຍໃນ ປີ2021**.....35
- ✓ **ນະໂຍບາຍຄຸ້ມຄອງຄວາມສ່ຽງ ປີ2021**.....35

- ✓ **ແຜນດຳເນີນງານປະຈຳ ປີ2022**
  - ➢ ແຜນດ້ານວຽກງານການຂາຍ ແລະ ການເງິນໃນປີ2022.....36
  - ➢ ແຜນດ້ານວຽກງານການຕະຫຼາດ (ລູກຄ້າ)ໃນປີ 2022.....36
  - ➢ ແຜນວຽກງານດ້ານພັດທະນາການຈັດການໃນປີ 2022…….....37
  - ➢ ແຜນດ້ານວຽກງານບຸກຄະລາກອນໃນປີ 2022.....37
  - ➢ ແຜນການລົງທຶນ ແລະ ຂະຫຍາຍກິດຈະການປະຈຳປີ 2022.....37



ສານຈາກທ່ານປະທານສະພາບໍລິຫານ

ເຖິງ ບັນດາທ່ານ ຜູ້ຖືຮຸ້ນ ທີ່ນັບຖື ແລະ ຮັກແພງ

ສະພາບໍລິຫານ ບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ ໄດ້ຈັດກອງປະຊຸມ ສະພາບໍລິຫານ ຄັ້ງທີ 1/2022 ໃນ ວັນທີ 18 ກຸມພາ 2022 ເວລາ 14:00 ໂມງ ຢູ່ທີ່ ບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ, ສຳນັກງານໃຫຍ່ ຊັ້ນ 4, ບ້ານ ໂພນຕ້ອງສະຫວາດ, ເມືອງ ຈັນທະບູລີ, ນະຄອນຫລວງວຽງຈັນ.

ກອງປະຊຸມໄດ້ພິຈາລະນາ 11 ບັນຫາສຳຄັນເຊັ່ນ: ພິຈາລະນາຮັບຮອງ ບົດລາຍງານກອງປະຊຸມສະພາບໍລິຫານ ໃນຄັ້ງກ່ອນ; ບົດລາຍງານຜົນການດຳເນີນທຸລະກິດ ຂອງບໍລິສັດ ປະຈຳປີ 2021 ແລະ ຮ່າງບົດລາຍງານການເງິນປະຈຳປີ 2021; ແຜນການດຳເນີນທຸລະກິດ ຂອງບໍລິສັດ ປະຈຳປີ 2022; ການຈ່າຍເງິນປັນຜົນຈາກການດຳເນີນທຸລະກິດຂອງ ບໍລິສັດ ປະຈຳປີ 2021; ການແຕ່ງຕັ້ງຜູ້ກວດສອບບັນຊີຈາກພາຍນອກ ແລະ ກຳນົດຄ່າບໍລິການກວດສອບບັນຊີພາຍ ນອກປີ 2022, ພິຈາລະນາ ແຕ່ງຕັ້ງປະທານ ແລະ ຮອງປະທານສະພາບໍລິຫານ ແທນປະທານ ແລະ ຮອງປະທານສະພາ ບໍລິຫານຜູ້ເກົ່າ ທີ່ລາອອກໄປ; ພິຈາລະນາ ແລະ ອະນຸມັດປັບເງິນອຸດໜູນເຂົ້າຮ່ວມກອງປະຊຸມ ຂອງສະມາຊິກສະພາ ບໍລິຫານ ຂອງບໍລິສັດ; ພິຈາລະນາ ແລະ ຂໍອະນຸມັດໃຫ້ບໍລິສັດເຂົ້າເຮັດສັນຍາກູ້ຢືມເງິນ ຈາກທະນາຄານ ແລະ ສະຖາບັນ ການເງິນທັງພາຍໃນ ແລະ ຕ່າງປະເທດ ເພື່ອນຳໃຊ້ໃນການຂະຫຍາຍສາຂາ ຂອງບໍລິສັດ; ການຮຽກປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2021; ກຳນົດການປິດປຶ້ມບັນຊີຜູ້ຖືຮຸ້ນ ແລະ ການອະນຸມັດໃຫ້ແຕ່ງຕັ້ງຄະນະກວດກາກອງປະຊຸມຜູ້ຖືຮຸ້ນ ແລະ ລົງຄະແນນສຽງ.

ຂ້າພະເຈົ້າ ຫວັງຢ່າງຍິ່ງວ່າ ບັນດາທ່ານຜູ້ຖືຮຸ້ນ ຈະໄດ້ຮັບຊາບ ແລະ ພ້ອມກັນພິຈາລະນາປະກອບສ່ວນສ້າງ ເງື່ອນໄຂອຳນວຍຄວາມສະດວກໃຫ້ແກ່ການປະຕິບັດແຜນທຸລະກິດປະຈາປີ 2022 ດຳເນີນໄປດ້ວຍດີ, ມີປະສິດທິຜົນ ສູງ ແລະ ຍືນຍົງ.

ທ່ານ ອຸ່ນ ຫຼ້າສຸກັນ

ປະທານສະພາບໍລິຫານ



ສານຈາກ ຜູ້ອຳນວຍການໃຫຍ່

ເຖິງ: ທ່ານ ຜູ້ຖືຮຸ້ນທີ່ນັບຖື

ໃນປີ 2021 ຜ່ານມາ, ຖ້າມກາງສະພາວະເສດຖະກິດໂລກທີ່ສືບຕໍ່ຖົດຖອຍລົງ ເນື່ອງຈາກພາວະໂລກລະບາດ COIVD-19 ສົ່ງຜົນຕໍ່ພາກພື້ນ ແລະ ປະເທດລາວພວກເຮົານຳ ສົ່ງຜົນກະທົບໃຫ້ພວກເຮົາຕ້ອງໄດ້ປິດການຂາຍສິນຄ້າ ທຸກສາຂາເປັນເວລາ 14 ວັນ ເພື່ອປ້ອງກັນການລະບາດຂອງພະຍາດ, ນອກຈາກນັ້ນ ການຂະຫຍາຍໂຕດ້ານການກໍ່ສ້າງກໍ່ລົດລົງ ຈາກລາຍໄດ້ຂອງຫຼາຍພາກສ່ວນທຸລະກິດລົດລົງເຊັ່ນ: ພາກທ່ອງທ່ຽວ ແລະ ອື່ນໆ; ພາວະເງິນເຟີ້ ແລະ ຄວາມ ຜັນຜວນ ຂອງອັດຕາແລກປ່ຽນ ທີ່ເພີ່ມສູງຂຶ້ນໃນປະເທດ ໄດ້ສ້າງຄວາມຫຍຸ້ງຍາກໃຫ້ພວກເຮົາບໍ່ໜ້ອຍໃນການສ້າງ ຍອດຂາຍ ເຖິງຢ່າງໃດກໍ່ຕາມພວກເຮົາກໍ່ສາມາດສືບຕໍ່ຮັກສາການຂະຫຍາຍໂຕຂອງຍອດຂາຍທີ 15% ຕາມທີ່ໄດ້ວາງ ເປົ້າໝາຍໄວ້ ຄວາມສຳເລັດດັ່ງກ່າວກໍ່ຍ້ອນໄດ້ຮັບການອຸ້ມຊູຊ່ວຍເຫລືອສະໜັບສະໜູນຈາກທຸກພາກສ່ວນທັງພາກ ລັດຖະບານ ຜູ້ສະໜອງທັງພາຍໃນ ແລະ ຕ່າງປະເທດ ພະນັກງານພາຍໃນບໍລິສັດຕະຫລອດຈົນເຖິງຄູ່ຮ່ວມທຸລະກິດ ຜູ້ ຖືຮຸ້ນ ແລະ ລຸກຄ້າ ທີ່ຄອຍໃຫ້ແນວທາງອຸ້ມຊູພວກເຮົາດ້ວຍດີຕະຫລອດມາ.

ໃນປີ 2022 ພວກເຮົາຕັ້ງເປົ້າໝາຍການຂະຫຍາຍໂຕໃນລະດັບ 10% ເນື່ອງຈາກການປະເມີນແລ້ວວ່າ ເສດຖະກິດໂລກ ແລະ ປະເທດລາວຍັງສືບຕໍ່ມີຄວາມຫຍຸ້ງຍາກແຕ່ພວກເຮົາໃນນາມທີມບໍລິຫານ ກໍ່ຈະສຸມໃສ່ ແລະ ໃຊ້ ຄວາມສາມາດ ເພື່ອເຮັດໃຫ້ບໍລິສັດເຂັ້ມແຂງ ແລະ ເຕີບໂຕຕໍ່ໄປ ແລະ ກ້າວໄປສູ່ການສ້າງຜົນຕອບແທນທີ່ດີຂຶ້ນແກ່ຜູ້ຖື ຮຸ້ນ ແລະ ສຸດທ້າຍພວກຂ້າພະເຈົ້າໃນນາມ ທີມບໍລິຫານຂໍສະແດງຄວາມ ຂອບໃຈເປັນຢ່າງຍິ່ງ ທີ່ທ່ານໃຫ້ຄວາມໄວ້ ວາງໃຈພວກເຮົາ ແລະ ຂໍອວຍພອນໃຫ້ຜູ້ຖືຫຸ້ນທຸກທ່ານຈົ່ງມີສຸຂະພາບເຂັ້ມແຂງ ແລະ ປະສົບຜົນສຳເລັດໃນໜ້າທີ່ການ ງານທຸກໆທ່ານ.

ທ່ານ ອັດດາມາ ສຸຄະບັນດິດ

ຜູ້ອຳນວຍການໃຫຍ່

ບົດລາຍງານປະຈຳປີ 2021

✓ ພາບລວມກ່ຽວກັບທຸລະກິດ ຂອງບໍລິສັດ.

➢ ວິໄສທັດ

ບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ ຈະເປັນຜູ້ນຳການພັດທະນາ ການຄ້າວັດສະດຸກໍ່ສ້າງ, ເຄື່ອງຕົບແຕ່ງເຮືອນ, ເຄື່ອງໃຊ້ພາຍໃນເຮືອນ ແລະ ເຄື່ອງອຸບປະໂພກທົ່ວໄປ ທີ່ທັນສະໄໝໃນທຸກຊ່ອງທາງການຂາຍ ເພື່ອຕອບສະໜອງລູກຄ້າທຸກລະດັບໃນ ສປປ ລາວ ກ້າວເຊື່ອມໂຍງສູ່ອາຊຽນ

➢ ພາລະກິດ

- ພັດທະນາການນຳເອົາສິນຄ້າດ້ານວັດສະດຸກໍ່ສ້າງ, ເຄື່ອງຕົບແຕ່ງເຮືອນ ,ເຄື່ອງໃຊ້ພາຍໃນເຮືອນ ແລະ ເຄື່ອງອຸບປະໂພກທົ່ວໄປ ຈາກທຸກຂົງເຂດ ທີ່ມີຄຸນນະພາບ ແລະ ລາຄາຍຸດຕິທຳໄປສູ່ທຸກກຸ່ມລູກຄ້າ ທຸກລະດັບລູກຄ້າ ແລະ ທຸກພື້ນທີ່ ຂອງປະເທດລາວ, ປະກອບສ່ວນເປັນອົງປະກອບໜຶ່ງ ທີ່ຂັບເຄື່ອນເສດຖະກິດລາວ;

- ພັດທະນາການບໍລິການ ແລະ ການສົ່ງມອບ ໃນທຸກຊ່ອງທາງການຂາຍທັງອອບລາຍ ແລະ ອອນລາຍ ໃຫ້ທັນສະໄໝ;

- ເສີມສ້າງຄວາມສາມາດ ຂອງບຸກຄະລາກອນ ແລະ ພະນັກງານສືບທອດຢ່າງຕໍ່ເນື່ອງ ເພື່ອໃຫ້ມີສັກກະຍະພາບສາມາດຮັບມືກັບການປ່ຽນແປງ ຂອງເທັກໂນໂລຢີໃໝ່ໃນໄລຍະປ່ຽນຜ່ານ ແລະ ພຶດຕິກຳ ຂອງຜູ້ບໍລິໂພກໃນຍຸກໃໝ່;

- ພັດທະນາການເຊື່ອມໂຍງການຄ້າ ຂອງລາວໃຫ້ຕິດພັນກັບການຄ້າ ຂອງອາຊຽນ ແລະ ໂລກ, ໃນຖານະ ທີ່ປະເທດລາວເປັນໃຈກາງ ຂອງພາກພື້ນ;

- ຮັກສາທຸກຜົນປະໂຫຍດ ຂອງທຸກພາກສ່ວນ ທີ່ມີສ່ວນໄດ້ສ່ວນເສຍກັບບໍລິສັດ ພ້ອມກັບປະກອບສ່ວນຮັບຜິດຊອບຕໍ່ສັງຄົມ ແລະ ສິ່ງແວດລ້ອມ ເພື່ອພັດທະນາຕາມທິດສີຂຽວຍືນຍົງ.

➢ ປະຫວັດຄວາມເປັນມາ ໂດຍຫໍ້ ຂອງ ສຸວັນນີ.

ບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ ເຊິ່ງຕໍ່ໄປນີ້ເອີ້ນວ່າ ("ບໍລິສັດ" ຫຼື "SVN") ດຳເນີນທຸລະກິດຈັດຈຳໜ່າຍ ສິນຄ້າດ້ານວັດສະດຸກໍ່ສ້າງ, ຕົບແຕ່ງເຮືອນ ແລະ ອາຄານ ແບບຄົບວົງຈອນ ຕັ້ງແຕ່ວັດສະດຸກໍ່ສ້າງໂຄງສ້າງຫຼັກຈົນເຖິງ ວັດສະດຸຕົບແຕ່ງພາຍໃນເຊັ່ນ: ກະໂລ, ສຸຂະພັນ, ນ້ຳສີ, ວັດສະດຸຕົບແຕ່ງເຮືອນ ແລະ ອາຄານສຳນັກງານຕ່າງໆ, ເຄື່ອງມື ອຸປະກອນທີ່ໃຊ້ໃນວຽກງານກໍ່ສ້າງ, ເຟີນິເຈີ ລວມທັງ ການໃຫ້ບໍລິການແບບຄົບວົງຈອນໃຫ້ແກ່ລູກຄ້າເຊັ່ນ: ໃຫ້ຄຳແນະ ນຳການເລືອກສິນຄ້າ, ການອອກແບບພາຍໃນຫ້ອງຄົວ-ຫ້ອງນ້ຳ, ຫຼັງຄາ ພ້ອມການປະເມີນລາຄາ, ບໍລິການຮັບຕິດຕັ້ງ ແບບມືອາຊີບ ແລະ ບໍລິການຈັດສົ່ງສິນຄ້າເຖິງມືລູກຄ້າ. ສິນຄ້າສ່ວນຫຼາຍນຳເຂົ້າຈາກຕ່າງປະເທດ ເປັນສິນຄ້າທີ່ມີ ຄຸນະພາບ ຍີ່ຫໍ້ສິນຄ້າທີ່ມີຊື່ສຽງ ແລະ ເປັນທີ່ຍອມຮັບລະດັບສາກົນ ໂດຍມີລະບົບໂປຣແກຣມຄອມພິວເຕີ ທີ່ທັນສະໄໝໃນການຈັດການດ້ານການຈຳໜ່າຍ ແລະ ຄວບຄຸມສິນຄ້າໃນສາງຢ່າງມີປະສິດທິພາບ. ສິນຄ້າແບ່ງອອກເປັນຫຼາຍກວ່າ 20 ໝວດຜະລິດຕະພັນ ເພື່ອຕອບສະໜອງຄວາມຕ້ອງການຂອງລູກຄ້າກ່ຽວກັບການກໍ່ສ້າງ ແລະ ຕົບແຕ່ງອາຄານ ພາຍ ໃຕ້ຄຳຂວັນທີ່ວ່າ: **“ຍົກລະດັບສິນຄ້າ ແລະ ບໍລິການໃຫ້ມີຄຸນະພາບ ສິ່ງມອບຖືກຕ້ອງ ຄົບຖ້ວນ ທັນເວລາ ສ້າງຄວາມ ເພິ່ງພໍໃຈໃຫ້ລູກຄ້າ ພັດທະນາຢ່າງຕໍ່ເນື່ອງ”.** ການຈັດຈຳໜ່າຍສິນຄ້າຮູບແບບທັນສະໄໝ ພາຍໃນສູນສະແດງສິນຄ້າຂະ ໜາດໃຫຍ່ (Showroom) ພາຍໃຕ້ເຄື່ອງໝາຍການຄ້າ “ສຸວັນນີ” (Souvanny) ທີ່ໃຫຍ່ເປັນອັນດັບໜຶ່ງໃນ ສປປ ລາວ.

ຮ້ານ ສຸວັນນີການຄ້າ ໄດ້ສ້າງຕັ້ງຂຶ້ນ ປີ 1988 ໂດຍ ທ່ານ ນາງ ສຸວັນນີ ສຸຄະບັນດິດ (ທ່ານ ນາງ ສຸວັນນີ), ທ່ານ ວັດດານາ ສຸຄະບັນດິດ (ທ່ານ ວັດດານາ) ແລະ ທ່ານ ພັນໂນລາ ສຸຄະບັນດິດ (ທ່ານ ພັນໂນລາ)

▪ ປີ ແລະ ເຫດການສຳຄັນ

ປີ 1988

▪ ຮ້ານ ສຸວັນນີການຄ້າ ໄດ້ສ້າງຕັ້ງຂຶ້ນ ໂດຍເລີ່ມມາຈາກ ທ່ານ ນາງ ສຸວັນນີ ໄດ້ເບິ່ງເຫັນເຖິງໂອກາດການຂະຫຍາຍຕົວ ຂອງ ສປປ ລາວ ໃນອະນາຄົດ ປະກອບກັບ ທ່ານ ວັດດານາ ໄດ້ສຳເລັດການສຶກສາດ້ານສະຖາປັດຕະຍະກຳ ແລະ ມີ ປະສົບການກ່ຽວກັບການກໍ່ສ້າງ, ພ້ອມຍັງເປັນຊ່ວງທີ່ ສປປ ລາວ ກຳລັງເລີ່ມມີການເຕີບໃຫຍ່ຂະຫຍາຍຕົວດ້ານການ ກໍ່ສ້າງພື້ນຖານໂຄງລ່າງ. ສະນັ້ນ, ຈຶ່ງໄດ້ເລີ່ມຕົ້ນດຳເນີນທຸລະກິດຈັດຈຳໜ່າຍວັດສະດຸກໍ່ສ້າງທົ່ວໄປ ໃນຮ້ານຄ້າຂະໜາດ ໜຶ່ງຫ້ອງແຖວ (ພື້ນທີ່ປະມານ 50 ຕາແມັດ) ທີ່ ບ້ານ ສີສະຫວາດ, ເມືອງ ຈັນທະບູລີ, ນະຄອນຫຼວງວຽງຈັນ ປັດຈຸບັນ ເປັນສາຂາຍ່ອຍ (ສາຂາທົ່ງຂັນຄຳ) ດ້ວຍທຶນຈົດທະບຽນ 3,250,000 ກີບ.

ປີ 1993

▪ ເປັນຊ່ວງທີ່ພາກການກໍ່ສ້າງໃນ ສປປ ລາວ ມີການຈະເລີນເຕີບໂຕຢ່າງຕໍ່ເນື່ອງ, ຄວາມຕ້ອງການສິນຄ້າປະເພດວັດສະ ດຸກໍ່ສ້າງເພີ່ມຂຶ້ນ ການແຂ່ງຂັນທາງດ້ານທຸລະກິດວັດສະດຸກໍ່ສ້າງຈຶ່ງເພີ່ມຂຶ້ນ ອັນເປັນສາເຫດເຮັດໃຫ້ຕົ້ນທຶນສິນຄ້າທີ່ນຳ ເຂົ້າມາຈັດຈຳໜ່າຍບໍ່ສາມາດແຂ່ງຂັນກັບຄູ່ແຂ່ງໄດ້. ເພື່ອໃຫ້ທຸລະກິດສາມາດນຳສິນຄ້າມາຈາກໂຮງງານຜູ້ຜະລິດໄດ້ໂດຍ ກົງໃນຕົ້ນທຶນທີ່ຖືກລົງ, ປະກອບກັບທາງ ພັກ ແລະ ລັດຖະບານ ມີນະໂຍບາຍສະໜັບສະໜູນໃຫ້ຊື້ກົງຂາຍປາຍ ຫຼື ການຫຼຸດຜ່ອນການຊື້ສິນຄ້າຜ່ານພໍ່ຄ້າຄົນກາງຕາມຊາຍແດນ ເພື່ອໃຫ້ຜູ້ບໍລິໂພກໃນ ສປປ ລາວ ໄດ້ຊົມໃຊ້ສິນຄ້າໃນລາຄາ ຖືກລົງ ອັນນຳໄປສູ່ການຍົກລະດັບຄວາມສາມາດໃນການແຂ່ງຂັນໃຫ້ສູງຂຶ້ນ. ພ້ອມທັງຜູ້ບໍລິຫານບໍລິສັດ ຕ້ອງການໃຫ້ ບໍລິສັດມີໂຄງສ້າງການຈັດການທີ່ເປັນລະບົບ ແລະ ມີແບບແຜນຫຼາຍຂຶ້ນ. ສະນັ້ນ, ບໍລິສັດ ຈຶ່ງໄດ້ມີການຈົດທະບຽນເປັນ ບໍລິສັດ ສຸວັນນີ ການຄ້າ ຂາອອກ-ຂາເຂົ້າ ຈຳກັດຜູ້ດຽວ ດ້ວຍທຶນຈົດທະບຽນ 100,000,000 ກີບ.

ສາຂາ ໂພນຕ້ອງ



ປີ 2000

- ນັບແຕ່ປີນັ້ນເປັນຕົ້ນມາ, ທຸລະກິດຂອງ ບໍລິສັດໄດ້ຮັບການຕອບສະໜອງທີ່ດີຂຶ້ນມາໂດຍ ຕະຫຼອດ ແລະ ໄດ້ມີການຈະເລີນເຕີບໂຕຢ່າງຕໍ່ ເນື່ອງ ຄວາມຕ້ອງການສິນຄ້າ ທາງດ້ານວັດສະດຸ ກໍ່ສ້າງເພີ່ມຂຶ້ນຕາມການຈະເລີນເຕີບໂຕຂອງ ສປປ ລາວ, ປະກອບກັບ ທ່ານ ກິດສະດາ ສຸຄະບັນດິດ ໄດ້ສຳເລັດການສຶກສາຈາກຕ່າງປະເທດ ແລະ ກໍ່ໄດ້ ເຂົ້າມາມີບົດບາດໃນການບໍລິຫານທຸລະກິດໃຫ້ມີຄວາມເຂັ້ມແຂງຂຶ້ນ. ສະນັ້ນ, ບໍລິສັດໄດ້ເປີດສາຂາໂພນຕ້ອງຂຶ້ນ ເພື່ອ ຈັດຈຳໜ່າຍ ວັດສະດຸກໍ່ສ້າງ, ຕົບແຕ່ງ, ສ້ອມແປງເຮືອນ ແບບຄົບວົງຈອນ ໂດຍຈັດວາງໃນສູນສະແດງສິນຄ້າທີ່ທັນສະ ໄໝເປັນຮ້ານທຳອິດຂອງ ສປປ ລາວ ດ້ວຍຂະໜາດ 1,500 ຕາແມັດ, ມີເນື້ອທີ່ສາງ 2,000 ຕາແມັດ, ເນື້ອທີ່ຈອດລົດ 20 ຄັນ ແລະ ມີການຍ້າຍສຳນັກງານໃຫຍ່ຈາກ ສາຂາທົ່ງຂັນຄຳ ມາເປັນ ສາຂາໂພນຕ້ອງ (ສຳນັກງານໃຫຍ່ໃນປັດຈຸບັນ).

ປີ 2004

- ສປປ ລາວ ໄດ້ເປີດກວ້າງຫຼາຍຂຶ້ນໃນພາກ ການລົງທຶນ ແລະ ເພື່ອຮອງຮັບການເປັນເຈົ້າພາບ ການແຂ່ງຂັນກິລາຊີເກມ ຄັ້ງທີ 25 ເຊິ່ງຈະຈັດຂຶ້ນ ໃນປີ 2009, ບໍລິສັດ ໄດ້ມີການເປີດສາຂາເພີ່ມ ຂຶ້ນ ທີ່ບ້ານ ນາແຮ່, ເມືອງ ສີໂຄດຕະບອງ, ນະຄອນຫຼວງວຽງຈັນ (ສາຂາສີໄຄ) ເຊິ່ງເປັນສູນ ຈັດຈຳໜ່າຍສິນຄ້າ ແລະ ບໍລິການ ທາງດ້ານວັດ ສະດຸກໍ່ສ້າງ, ຕົບແຕ່ງເຮືອນ ແລະ ອາຄານ ແບບ ຄົບວົງຈອນ ທີ່ໃຫຍ່ທີ່ສຸດໃນ ສປປ ລາວ ໂດຍມີຂະໜາດພື້ນທີ່ວາງສະແດງສິນຄ້າປະມານ 2,000 ຕາແມັດ, ພື້ນທີ່ສາງ ປະມານ 5,000 ຕາແມັດ ແລະ ພື້ນທີ່ຈອດລົດ 60 ຄັນ.

ສາຂາ ສີໄຄ



ປີ 2015

- ໃນປີ 2015, ບໍລິສັດ ໄດ້ມີການປັບປຸງວິສາຫະກິດເພື່ອໃຫ້ສອດຄ່ອງກັບການປ່ຽນແປງໃໝ່, ສະພາບຄວາມ ຕ້ອງການ ຫຼື ຄວາມຈຳເປັນທາງທຸລະກິດ ແລະ ບົດບັນຍັດຂອງກົດໝາຍວ່າດ້ວຍວິສາຫະກິດ ເຊິ່ງ ບໍລິສັດ ໄດ້ປ່ຽນຮູບ ແບບວິສາຫະກິດ ຈາກ ບໍລິສັດ ສຸວັນນີການຄ້າ ຂາອອກ-ຂາເຂົ້າ ຈຳກັດຜູ້ດຽວ ມາເປັນ ບໍລິສັດ ສຸວັນນີ ການຄ້າ ຂາ ອອກ-ຂາເຂົ້າ ຈຳກັດ, ດ້ວຍທຶນຈົດທະບຽນ 500,000,000 ກີບ.
- ອີງຕາມກອງປະຊຸມວິສາມັນຜູ້ຖືຮຸ້ນ ຄັ້ງທີ 1/2015 ວັນທີ 28 ກໍລະກົດ 2015 ທີ່ໄດ້ມີວາລະພິຈາລະນາປັບປຸງມູນ ຄ່າທີ່ກຳນົດຮຸ້ນຂອງບໍລິສັດ ຈາກເດີມ 50,000 ກີບຕໍ່ຮຸ້ນ ເປັນ 2,000 ກີບຕໍ່ຮຸ້ນ, ພິຈາລະນາເລື່ອງການເພີ່ມທຶນຂອງ ບໍລິສັດ ຈາກເດີມ 500,000,000 ກີບ ເປັນ 280 ຕື້ກີບ ໂດຍມີຈຳນວນຮຸ້ນທັງໝົດ 140,000,000 ຮຸ້ນ.
- ບໍລິສັດ ໄດ້ມີການຮ່ວມລົງທຶນກັບ ບໍລິສັດ ໂກວ້ຍ້ອນເຮົ້າ ອິນເຕີເນຊັນແນວ ຈຳກັດ ເຊິ່ງເປັນບໍລິສັດຮ່ວມທຶນ ລະຫວ່າງ ບໍລິສັດ ສະຫຍາມໂກວ້ຍ້ອນເຮົ້າ ຈຳກັດ (ມະຫາຊົນ) ແລະ ບໍລິສັດ ປູນຊີເມັນໄທ ຈຳກັດ ເຊິ່ງເປັນຜູ້ປະກອບ ການຈັດຈຳໜ່າຍວັດສະດຸກໍ່ສ້າງ ແລະ ຕົບແຕ່ງອາຄານແບບຄົບວົງຈອນໃນປະເທດໄທ ໂດຍການຮ່ວມລົງທຶນດັ່ງກ່າວ

ຍັງເປັນການຖ່າຍທອດຄວາມຮູ້ໃນການດຳເນີນທຸລະກິດ (Know-how) ແລະ ເສີມສ້າງສັກກະຍະພາບໃນການແຂ່ງຂັນທາງທຸລະກິດຂອງບໍລິສັດໃນໄລຍະຍາວ (ໂດຍຄອບຄົວສຸຄະບັນດິດ ຖືຮຸ້ນ 51% ແລະ ບໍລິສັດ ໂກວ້ຍ້ອນເຮົ້າ ອິນເຕີເນຊັນແນວ ຈຳກັດ ຖືຮຸ້ນ 33,94%)

- ໃນວັນທີ 13 ກັນຍາ 2015 ບໍລິສັດໄດ້ມີການປະຊຸມວິສາມັນຜູ້ຖືຮຸ້ນຄັ້ງທີ 3/2015 ໂດຍມີວາລະທີ່ສຳຄັນ ຄື: ການແປສະພາບເປັນບໍລິສັດມະຫາຊົນ ແລະ ໄດ້ປ່ຽນຊື່ ເປັນ “ບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ” ພ້ອມກັບໄດ້ເພີ່ມທຶນຈົດທະບຽນເພື່ອຮອງຮັບການອອກຈຳໜ່າຍຮຸ້ນສາມັນເພີ່ມທຶນໃຫ້ແກ່ມວນຊົນຄັ້ງທຳອິດ (IPO) ຈຳນວນ 50 ຕື້ ກີບ ໂດຍອອກຮຸ້ນສາມັນເພີ່ມທຶນຈຳນວນ 25,000,000 ຮຸ້ນ, ມູນຄ່າກຳນົດ (Par Value) 2,000 ກີບຕໍ່ຮຸ້ນ ເພື່ອຮອງຮັບການຂະຫຍາຍຕົວຂອງທຸລະກິດ ແລະ ການກຽມຕົວຈົດທະບຽນໃນຕະຫຼາດຫຼັກຊັບລາວ ໃນການເປັນບໍລິສັດຊັ້ນນຳທາງດ້ານຈັດຈຳໜ່າຍສິນຄ້າ ແລະ ບໍລິການ ດ້ານວັດສະດຸກໍ່ສ້າງ ຕົບແຕ່ງເຮືອນ ແລະ ອາຄານ ແບບຄົບວົງຈອນ ໃນ ສປປ ລາວ.
- ໄດ້ຮັບໃບຢັ້ງຢືນ ລະບົບການບໍລິຫານຈັດການຕາມມາດຕະຖານ ISO9001:2008 ວັນທີ 25/09/2015.
- ພ້ອມດຽວກັນນັ້ນ ທາງ ບໍລິສັດ ສຸວັນນີ ໂຮມເຊັນເຕີ ມາຫາຊົນ ໄດ້ເປີດຈອງຮຸ້ນ (IPO) ລະຫວ່າງວັນທີ 29-30/11/-01/12/2015 ລວມທັງໝົດ 25,000,000 ຮຸ້ນ ໃນລາຄາຂາຍ 3,100 ກີບ/ຮຸ້ນ.
- ນອກຈາກນັ້ນ, ບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ ໄດ້ຈົດທະບຽນເຂົ້າເປັນ ບໍລິສັດຈົດທະບຽນ ໃນຕະຫຼາດຫຼັກຊັບລາວ ໃນວັນທີ 11 ທັນວາ 2015 ຢ່າງເປັນທາງການ.

ປີ 2016

- ບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ (ສ.ວ.ນ) ໄດ້ຈັດກອງປະຊຸມສາມັນຜູ້ຖືຮຸ້ນປະຈຳປີ 2015 ເມື່ອວັນທີ 22 ເມສາ 2016 ເວລາ 14:00 ໂມງ ທີ່ຫ້ອງປະຊຸມໃຫຍ່ຊັ້ນ 8, ອາຄານຕະຫຼາດຫຼັກຊັບລາວ (ຕລຊລ), ບ້ານ ໂພນທັນ, ຖະໜົນ T4, ເມືອງ ໄຊທານີ, ນະຄອນຫຼວງວຽງຈັນ, ສປປ ລາວ, ໂດຍມີຜູ້ຖືຮຸ້ນເຂົ້າຮ່ວມປະຊຸມທັງໝົດ **118 ທ່ານ**, ຖືຮຸ້ນລວມ 157,735,300 ຮຸ້ນ ຄິດເປັນ 95.60% ຂອງຈຳນວນຮຸ້ນທັງໝົດຂອງບໍລິສັດ ໂດຍທີ່ປະຊຸມພິຈາລະນາ 9 ວາລະ ວາລະສຳຄັນຄື: ການພິຈາລະນາເງິນປັນຜົນປະຈຳປີ 2015 ຂອງບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ ເຊິ່ງກອງປະຊຸມຜູ້ຖືຮຸ້ນໄດ້ມີມະຕິ ແບ່ງປັນເງິນປັນຜົນເປັນຈຳນວນເງິນ 45 ກີບ/ຮຸ້ນ.

ປີ 2017 (ເດືອນ ມັງກອນ)

- ບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ (ສ.ວ.ນ) ໄດ້ເປີດສາຂາໃໝ່ທີ່ ບ້ານໂຊກໃຫຍ່ (ເສັ້ນທາງ 450 ປີ), ເມືອງໄຊເສດຖາ, ແຂວງ ນະຄອນຫຼວງວຽງຈັນ ໃນວັນທີ 30/01/2017 ດ້ວຍພື້ນທີ່ວາງສະແດງສິນຄ້າບໍ່ຕ່ຳກ່ວາ 12,000 ຕາແມັດ ໂດຍການເປີດ ສາຂາ ໂຊກໃຫຍ່ (ເສັ້ນທາງ 450 ປີ) ໃນນະຄອນຫຼວງວຽງຈັນ ດ້ວຍສິນຄ້າທີ່ຫຼາກຫຼາຍ ແລະ ຄົບວົງຈອນ ເຊິ່ງໄດ້ຮັບການຕອບຮັບຈາກ ປະຊາຊົນ ຊາວນະຄອນຫຼວງໄດ້ເປັນຢ່າງດີ.

ສາຂາ ໂຊກໃຫຍ່



ສາຂາ ປາກຊັນ



- ປີ 2017 ເດືອນ 9 ທາງ ບໍລິສັດ ໄດ້ມີພິທີເປີດອີກ ໜຶ່ງສາຂາຄື: ສາຂາ ປາກຊັນ ໃນວັນທີ 30/09/2017 ເຊິ່ງເປັນສາຂາທຳອິດ ຂອງ ບໍລິສັດ ສຸວັນນີ ໂຮມເຊັນເຕີ ມາຫາຊົນ ທີ່ໄດ້ເປີດໃຫ້ບໍລິການຢູ່ຕ່າງແຂວງ ທີ່ຢູ່ ບ້ານ ສີສະອາດ ເມືອງ ປາກຊັນ ແຂວງບໍລິຄຳໄຊດ້ວຍພື້ນທີ່ວາງສະແດງສິນຄ້າບໍ່ຕ່ຳກ່ວາ 7,500 ຕາແມັດ ແລະ ເນື້ອທີ່ສາງປະມານ 7,500 ຕາແມັດ ໂດຍມີສິນຄ້າທີ່ຫຼາກຫຼາຍ ແລະ ຄົບວົງຈອນ ໂດຍການເຂົ້າຮ່ວມ ຂອງ ທ່ານ ກອງແກ້ວ ໄຊສົງຄາມ ເຈົ້າແຂວງບໍລິຄຳໄຊ ໂດຍໄດ້ຮັບການຕອບຮັບ ຈາກຊາວເມືອງ ປາກຊັນ ກໍ່ຄື ຊາວແຂວງ ບໍລິຄຳໄຊ ເປັນຢ່າງດີ.

ປີ 2018.

ສາຂາ ປາກເຊ



- ພາຍໃນປີ 2018, ບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ ໄດ້ເປີດ ອີກໜຶ່ງສາຂາ ທີ່ທາງພາກໃຕ້ ເຊິ່ງ ກວມເອົາຕະຫຼາດພາກໃຕ້ຄື: ແຂວງ ຈຳປາສັກ, ແຂວງ ສາລະວັນ, ແຂວງ ເຊກອງ ແລະ ແຂວງ ອັດຕະປື ນັ້ນກໍ່ຄື: ສາຂາ ປາກເຊ ທີ່ຕັ້ງຢູ່ ບ້ານ ກາງ ນະຄອນປາກເຊ ແຂວງ ຈຳປາສັກ ເຊິ່ງເປີດໃຫ້ບໍລິການຢ່າງເປັນທາງການ ເມື່ອວັນທີ 17 ມີຖຸນາ 2018 ໂດຍການເຂົ້າຮ່ວມພິທີເປີດ ຂອງ ທ່ານ ສົມສະຫວາດ ເລັ່ງສະຫວັດ ທີ່ປຶກສາຄະນະບໍລິຫານສູນກາງພັກ ແລະ ທ່ານ ປອ ບຸນຖອງ ດີວິໄຊ ເຈົ້າແຂວງ ແຂວງ ຈຳປາສັກ.

- ແລະ ໃນວັນທີ 22 ກັນຍາ 2018 ບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ ໄດ້ຮັບໃບຢັ້ງຢືນ ລະບົບການບໍລິຫານຈັດການມາດຕະຖານ ISO 9001 ສະບັບປີ 2015.

ປີ 2019.

- ໃນວັນທີ 1 ກໍລະກົດ 2019 ສຸວັນນີ ໂຮມເຊັນເຕີ ມະຫາຊົນ ໄດ້ມີການປິດບໍລິການ ສາຂາ ທົ່ງຕູມ.

ປີ 2020.

ສາຂາ ທ່າແຂກ



- ໃນວັນທີ 02 ມີນາ 2020 ບໍລິສັດ ສຸວັນນີ ໂຮມ ເຊັນເຕີ ມະຫາຊົນ ໄດ້ຂະຫຍາຍສາຂາ ເພີ່ມອີກ 1 ສາຂາຄື: ສາຂາ ທ່າແຂກ ຢູ່ທີ່ ບ້ານ ໂພນພີມ, ເມືອງ ທ່າແຂກ ແຂວງ ຄຳມ່ວນ

✓ ທິບທວນຜົນການດຳເນີນງານ ປີ 2021.

➢ ສະພາບເສດຖະກິດສາກົນ ແລະ ເສດຖະກິດພາຍໃນປະເທດ ປີ 2021


ປີ 2021 ເປັນປີທີ່ໂລກປະເຊີນກັບວິກິດເສດຖະກິດຈາກສົງຄາມການຄ້າລະຫວ່າງ ຈີນ ແລະ ສະຫະລັດອາເມລິກາ , ຄວາມຂັດແຍ້ງໃນພາກພື້ນຕາເວັນອອກກາງ ແລະ ຄວາມຂັດແຍ້ງໃນອາຊີຕາເວັນອອກ ລວມທັງພາວະການແຜ່ລະບາດ ຂອງເຊື້ອພະຍາດ COVID-19 ເຮັດໃຫ້ສິ່ງຜົນໂດຍລວມຕໍ່ເສດຖະກິດລາວ, ປະກອບກັບຄວາມຫຍຸ້ງຍາກໃນດ້ານ ງົບປະມານຂອງເສດຖະກິດພາຍໃນປະເທດລາວ ເຮັດໃຫ້ການຂະຫຍາຍຕົວທາງດ້ານເສດຖະກິດຂອງລາວບໍ່ເປັນໄປ ຕາມເປົ້າໝາຍທີ່ວາງໄວ້.

➢ ຜົນການເຄື່ອນໄຫວທີ່ພົ້ນເດັ່ນໂດຍຫຍໍ້ ຂອງ ບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ ປີ 2021


ປີ 2021 ຜ່ານມາ ບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ ພວກເຮົາໄດ້ປະສົບຜົນສຳເລັດໃນການສ້າງຍອດຂາຍໂດຍ ມີການເຕີບໂຕເກືອບ 15% ເນື່ອງຈາກການຂະຫຍາຍສາຂາ ແລະ ການປັບກຸ່ມສິນຄ້າໃໝ່ ເຊິ່ງເປັນໄປຕາມແຜນດັດປັບ ເປົ້າໝາຍທີ່ໄດ້ວາງໄວ້ ແລະ ຍັງໄດ້ວາງແຜນການຂະຫຍາຍຊ່ອງທາງການຂາຍ ແລະ ຂອບເຂດພື້ນທີ່ການຂາຍໃຫ້ກ້ວາງ ຂວາງຕື່ມ, ພ້ອມກັນນັ້ນກໍ່ກຽມພື້ນຖານ ເພື່ອຮອງຮັບການຂະຫຍາຍໂຕເມື່ອຕະຫລາດມີການຟື້ນໂຕກັບມາ ລວມທັງ ການຮອງຮັບການຂະຫບາຍໂຕ ຂອງການກໍ່ສ້າງຫຼັງເສັ້ນທາງລົດໄຟ ລາວ-ຈີນ ສຳເລັດໃນປີ 2022

➢ ການດຳເນີນທຸລະກິດ ແລະ ຜົນການດຳເນີນງານປີ 2021


▪ ລາຍຮັບ




ບໍລິສັດມີລາຍຮັບລວມໃນປີ 2020 ເທົ່າກັບ 396.712 ລ້ານກີບ ແລະ ໃນປີ 2021 ໄດ້ມີລາຍຮັບລວມເພີ່ມຂຶ້ນມາເປັນ 455.188 ລ້ານກີບ ເຫັນໄດ້ວ່າມີລາຍຮັບລວມເພີ່ມຂຶ້ນ ໃນອັດຕາສ່ວນ 14,74 ສ່ວນຮ້ອຍຈາກລາຍຮັບປີ 2020 ເນື່ອງຈາກວ່າບໍລິສັດໄດ້ມີການເພີ່ມຄວາມຫຼາກຫຼາຍ ຂອງສິນຄ້າ ແລະ ມີການເພີ່ມຈຳນວນສິນຄ້າໃໝ່ໆເຂົ້າມາ ພ້ອມດຽວກັນນັ້ນ ບໍລິສັດຍັງໄດ້ມີລາຍຮັບຈາກການຂະຫຍາຍສາຂາໃໝ່ເພີ່ມຂຶ້ນມາຕາມລຳດັບ (ເຊິ່ງປະຈຸບັນມີຢູ່ 7 ສາຂາ).




- **ກຳໄລ-ຂາດທຶນ**






ບໍລິສັດມີກຳໄລສຸດທິໃນປີ 2020 ເທົ່າກັບ 12.009 ລ້ານກີບ ແລະ ມີອັດຕາກຳໄລສຸດທິເທົ່າກັບ 3,03 ສ່ວນຮ້ອຍ ແລະ ໃນປີ 2021 ບໍລິສັດໄດ້ມີກຳໄລສຸດທິ ເພີ່ມຂຶ້ນເທົ່າກັບ 24.669 ລ້ານກີບ ມີອັດຕາກຳໄລສຸດທິເທົ່າກັບ 5,42 ສ່ວນຮ້ອຍ ການທີ່ບໍລິສັດໄດ້ມີກຳໄລສຸດທິເພີ່ມຂຶ້ນ ເນື່ອງຈາກ ບໍລິສັດ ໄດ້ມີລາຍຮັບຈາກການຂາຍທັງສາຂາເກົ່າ ແລະ ໃໝ່ ເພີ່ມຂຶ້ນ ລວມທັງການປັບສັດສ່ວນສິນຄ້າຈາກໂຄງສ້າງໄປສູ່ສິນຄ້າຕົບແຕ່ງຫຼາຍຂຶ້ນ.

- **ລວມຊັບສິນ**




ຊັບສິນລວມໃນ ວັນທີ 31 ທັນວາ 2020 ເທົ່າກັບ 869.890 ລ້ານກີບ ເພີ່ມຂຶ້ນເປັນ 949.644 ລ້ານກີບໃນວັນທີ 31 ທັນວາ 2021 ການທີ່ມີຊັບສິນລວມເພີ່ມຂຶ້ນຍ້ອນວ່າ ບໍລິສັດໄດ້ມີການຂະຫຍາຍສາຂາ ແລະ ຊື້ອຸປະກອນສຳລັບສາຂາ ໃໝ່ເຊັ່ນ: ສາຂາທ່າແຂກ ແລະ ສາຂາສະຫວັນນະເຂດ ເພີ່ມຂຶ້ນ ພ້ອມດຽວກັນນັ້ນ ເຄື່ອງສະຕ໋ອກໃນສາງກໍ່ເພີ່ມຂຶ້ນ ຕາມການຂະຫຍາຍສາຂາເຫຼົ່ານັ້ນ.

- **ລວມໜີ້ສິນ**



ໜີ້ສິນລວມໃນວັນທີ 31 ທັນວາ 2020 ເທົ່າກັບ 166.022 ລ້ານກີບ ເພີ່ມຂຶ້ນເປັນ 189.925 ລ້ານກີບ ເຊິ່ງໜີ້ສິນ ທີ່ເພີ່ມຂຶ້ນສ່ວນໃຫຍ່ແມ່ນ ໜີ້ສິນໝຸນວຽນ ເພື່ອການຄ້າ ໄດ້ແກ່ ເງິນເບີກເກີນບັນຊີ ແລະ ເງິນກູ້ຢືມໄລຍະສັ້ນຈາກສະຖາບັນການເງິນ ແລະ ອີກສ່ວນໜຶ່ງແມ່ນ ເງິນມັດຈຳຮັບຈາກລູກຄ້າ ເຊິ່ງວ່າໄດ້ນຳໃຊ້ເຂົ້າໃນການດຳເນີນທຸລະກິດ ຂອງບໍລິສັດ.


- **ລວມສ່ວນທຶນຈາກຜູ້ຖືຮຸ້ນ**



ຫົວໜ່ວຍ: ລ້ານກີບ	**31 ທັນວາ 2020**	**31 ທັນວາ 2021**
ທຶນຈົດທະບຽນ:	330.000	330.000
ສ່ວນເກີນຈາກການຈຳໜ່າຍຮຸ້ນ	24.735	24.735
ເງິນສຳຮອງຕາມກົດໝາຍ:	5.973	8.440
ເງິນສຳຮອງອື່ນໆ	5.723	8.190
ກຳໄລສະສົມ:	164.542	180.915
ລາຍການທີ່ມີການປັບປຸງ:	172.891	207.436
ລວມທຶນຈາກຜູ້ຖືຮຸ້ນ	**703.868**	**759.719**

ໃນວັນທີ 31 ທັນວາ 2020 ລວມທຶນຈາກຜູ້ຖືຮຸ້ນທັງໝົດເທົ່າກັບ 703.868 ລ້ານກີບ ເຊິ່ງໃນວັນທີ 31 ທັນວາ 2021 ເພີ່ມຂຶ້ນເປັນ 759.719 ລ້ານກີບ ເຊິ່ງມາຈາກບໍລິສັດໄດ້ມີການຫັກເງິນສຳຮອງຕາມກົດໝາຍ ແລະ ເງິນສຳຮອງອື່ນໆເພີ່ມເຂົ້າມາ ນອກຈາກນັ້ນຍັງມີກຳໄລສະສົມເພີ່ມຂຶ້ນຖ້າທຽບໃສ່ປີ 2020 ຈາກ 164.542 ລ້ານກີບ ເປັນ 180.915 ລ້ານກີບ ເນື່ອງຈາກໄດ້ມີກຳໄລສຸດທິພາຍໃນປີເພີ່ມຂຶ້ນ ພ້ອມດຽວກັນນັ້ນຍັງມີອັດຕາແລກປ່ຽນຈາກການແປງຄ່າງົບການເງິນທີ່ເພີ່ມຂຶ້ນຕາມລຳດັບ.

- **ອັດຕາສ່ວນໜີ້ຕໍ່ທຶນ D/E Ratio**



ໃນປີ 2020 ມີຍອດໜີ້ສິນຕໍ່ທຶນເທົ່າກັບ 0,24 ເທົ່າ ເຊິ່ງໃນປີ 2021 ມີຍອດໜີ້ສິນຕໍ່ທຶນເພີ່ມຂຶ້ນເທົ່າກັບ 0,25 ເທົ່າ ເນື່ອງຈາກບໍລິສັດໄດ້ມີໜີ້ສິນໄລຍະຍາວເພີ່ມຂຶ້ນ ພ້ອມດຽວກັນນັ້ນ ຍັງມີກຳໄລສະສົມເພີ່ມຂຶ້ນ ເນື່ອງຈາກມີກຳໄລປະຈຳປີເພີ່ມຂຶ້ນຕາມລຳດັບ ໂດຍຕາມຫຼັກເກນແລ້ວການ ທີ່ມີໜີ້ສິນຕໍ່ທຶນທີ່ຕ່ຳກວ່າ 1 ຖືວ່າດີ ເຊິ່ງຈະສະແດງໃຫ້ເຫັນເຖິງຄວາມສ່ຽງເລື່ອງພາລະໜີ້ສິນໜ້ອຍ ແລະ ມີຄວາມສາມາດໃນການກູ້ຢືມເພີ່ມຂຶ້ນ.

➢ ວຽກງານດ້ານການຕະຫຼາດ ປີ2021


- **ຍຸດທະສາດດ້ານຜະລິດຕະພັນ (Product):**

- ໄດ້ມີການຈັດສັນສິນຄ້າໃຫ້ເປັນໝວດໝູ່ ທີ່ຖືກຕ້ອງ ແລະ ກຳນົດຈຸດຢືນ ຂອງສິນຄ້າແຕ່ລະໂຕຢ່າງຊັດເຈນ ເພື່ອກຳນົດແນວທາງ ປະຕິບັດໃຫ້ມີປະສິດຕິພາບ
- ໄດ້ມີການກຳນົດການຮັບປະກັນສິນຄ້າ ໃນແຕ່ລະໝວດ ທີ່ເຫັນວ່າມີຄວາມຈຳເປັນ ເພື່ອສ້າງຄວາມໝັ້ນໃຈ ໃຫ້ລູກຄ້າ ໃນດ້ານຄຸນນະພາບສິນຄ້າ.
- ຈັດການສິນຄ້າຂາຍດີໃຫ້ພ້ອມຂາຍຕະຫຼອດເວລາ ແລະ ຈັດການສິນຄ້າຂາຍຕ່ຳເມື່ອງໃຫ້ພຽງພໍ ກັບຄວາມຕ້ອງການ ຂອງລູກຄ້າ

- **ຍຸດທະສາດດ້ານຊ່ອງທາງການຈັດຈຳໜ່າຍ (Place)**

- ໃນປີ 2021 ທີ່ຜ່ານມາ ສຸວັນນີ ໂຮມເຊັນເຕີ ໄດ້ສືບຕໍ່ສ້າງຄວາມສາຍພັນທີ່ດີ ກັບກຸ່ມລູກຄ້າ ໃນຊ່ອງທາງຕ່າງໆ ບໍ່ວ່າຈະເປັນລູກຄ້າໜ້າຮ້ານ, ຮ້ານຄ້າຊ່ວງ, ໂຄງການ, ຊ່າງ ແລະ ນັກຮຽນວິຊາຊີບ ໂດຍຜ່ານ ໂປຣໂມຊັ່ນຫຼາກຫຼາຍ
- ໄດ້ພັດທະນາເວັບໄຊ ໂດຍນຳສະເໜີຂໍ້ມູນທີ່ທັນສະໄໝ ແລະ ງ່າຍຕໍ່ການໃຊ້ງ່າຍ ຫຼາຍຂຶ້ນ ແລະ ສ້າງ ສຸວັນນີ APP ທີ່ລູກຄ້າສາມາດເລືອກຊື້ສິນຄ້າໄດ້ ທາງອອນລາຍ ເພື່ອສ້າງຄວາມສະດວກໃຫ້ແກ່ລູກຄ้า ຕາມການປ່ຽນແປງພຶດຕິກຳການຊື້ສິນຄ้าทางออนลาย ของลูกค้านับมื้หลายขึ้น.

WWW. SOUVANNY.LA



✓ **ຍຸດທະສາດການສົ່ງເສີມການຕະຫຼາດ (Promotion)**

- **ການໂຄສະນາ:**

ພວກເຮົາໄດ້ເຮັດໂຄສະນາຫຼາຍຊ່ອງທາງ ເພື່ອສ້າງຄວາມຮັບຮູ້ ແລະ ສ້າງຄວາມຕ້ອງການສິນຄ້າ ໂດຍຜ່ານ ໝວດສິນຄ້າ ສະເພາະເຈາະຈົງ ທີ່ເປັນຈຸດແຂງ ຂອງອົງກອນ ໂດຍຜ່ານຊ່ອງທາງສື່ສານຕ່າງໆເຊັ່ນ:

- ຜ່ານສື່ສິ່ງພິມ ໂດຍສື່ສານ ທາງໃບປິວເປັນຫຼັກ ເພື່ອແຈກຢາຍໃຫ້ກຸ່ມລູກຄ້າເປັນໝາຍ







- ຜ່ານປ້າຍໂຄສະນາ: ໂດຍເນັ້ນສື່ສານຜ່ານປ້າຍໂຄສະນາແຄມທາງໃຫຍ່ ທີ່ເປັນເສັ້ນທາງຫຼັກ ຂອງແຕ່ລະແຂວງ ເພື່ອເນັ້ນການສ້າງຄວາມຮັບຮູ້ຍີ່ຫໍ້ສິນຄ້າ ແລະ ສຸວັນນີ ແລະ ປ້າຍຕ່າງໆ ທັງພາຍໃນ ແລະ ນອກຫ້ອງຂາຍ





- ຜ່ານສື່ວິທະຍຸເຊັ່ນ: ວິທະຍຸແຂວງ ບໍລິຄຳໄຊ, ຄຳມ່ວນ, ຈຳປາສັກ ແລະ ສະຫວັນນະເຂດ:
- ຜ່ານສື່ອອນລາຍ (Online)ເຊັ່ນ: Website, Facebook, Line official, Instagram, Youtube, Tiktok ແລະ ອື່ນໆ

- **ການສົ່ງເສີມການຂາຍ**

ພວກເຮົາໄດ້ເຮັດ ກິດຈະການສົ່ງເສີມການຂາຍຫຼາຍຮູບແບບ ບໍ່ວ່າຈະເປັນການສົ່ງເສີມການຂາຍ ໂດຍຜ່ານພະນັກງານຂາຍ, ຜ່ານພໍ່ຄ້າຄົນກາງ ແລະ ມຸ້ງເນັ້ນຕົວລູກຄ້າເຊັ່ນ:

- ກິດຈະກຳ Souvanny Club ສະໝັກສະມາຊິກ ສະສົມຄະແນນ ແລກຂອງລາງວັນ ເພື່ອໃຫ້ລູກຄ້າກັບມາຊື້ຊ້ຳຈົນກາຍເປັນລູກຄ້າປະຈຳ.



- ກິດຈະກຳ ຊື້ຄົບຮັບເລີຍ ໂດຍບໍ່ຕ້ອງລຸ້ນ ທີ່ເປັນພາບລວມສິນຄ້າທຸກລາຍການ ແລະ ສະເພາະສິນຄ້າບາງລາຍການ ເພື່ອສ້າງຄວາມປະທັບໃຈໃຫ້ລູກຄ້າທັນທີ





- ກິດຈະກຳ ຊິງໂຊກ ທ້າຍປີ 2021 ເລີ່ມແຕ່ວັນທີ 15 ຕຸລາ-31 ທັນວາ 2021 ຊື້ຄົບ 500,000 ກີບ ຮັບສະຫຼາກຊິງໂຊກ 1ໃບ ລຸ້ນຮັບຂອງລາງວັນຫຼາຍກວ່າ 1,000 ລາງວັນ ແລະ ລວມມູນຄ່າຫຼາຍກວ່າ 300 ລ້ານກີບ












- ກິດຈະກຳ ຫຼຸດລາຄາພິເສດ ແລະ ສິນຄ້ານາທີທອງ ຕາມເທດສະການຕ່າງໆເຊັ່ນ: ງານເປີດສະຫວັນນະເຂດ,

➢ ວຽກງານດ້ານບຸກຄະລາກອນ ປີ 2021

- ໄດ້ມີການເລື່ອນຕຳແໜ່ງໃຫ້ພະນັກງານທີ່ມີຜົນງານດີເດັ່ນປະຈຳປີ ແລະ ປັບຂຶ້ນເງິນເດືອນໃຫ້ພະນັກງານຫຼາຍຕຳແໜ່ງ
- ໄດ້ມີການສົ່ງເສີມຄວາມຮູ້ໃຫ້ແກ່ພະນັກງານ ໂດຍຜ່ານການສຳມະນາທັງພາຍໃນ ແລະ ພາຍນອກຢ່າງເປັນລະບົບ ຕໍ່ເນື່ອງທຸກເດືອນໂດຍສະເພາະ ທາງດ້ານ ຄວາມຮູ້ສິນຄ້າ, ເຕັກນິກການຂາຍ, ການບໍລິການ ແລະ ວິຊາສະເພາະທີ່ເຫັນວ່າຈຳເປັນ
- ໃນເບື້ອງສະຫວັດດີການ ພວກເຮົາໄດ້ເອົາໃຈໃສ່ ແລະ ເບີກຈ່າຍເງິນເດືອນໃຫ້ພະນັກງານເປັນປົກກະຕິ

ອັດຕາການສະເລ່ຍອາຍຸຂອງພະນັກງານພາຍໃນອົງກອນ





- **ການຝຶກອົບຮົມພະນັກງານ**
  - ໄດ້ມີການຈັດສຳມະນາພາຍໃນ ເພື່ອສົ່ງເສີມຄວາມຮູ້ທາງດ້ານສິນຄ້າ, ເຕັກນິກການຂາຍ ແລະ ການບໍລິການໃຫ້ແກ່ພະນັກງານ




➢ ວຽກງານການລົງທຶນປະຈຳປີ 2021





- ໃນວັນທີ 14 ທັນວາ 2021 ບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ ໄດ້ມີການຂະຫຍາຍເພີ່ມອີກ 1 ສາຂາຄື: **ສາຂາ ສະຫວັນນະເຂດ** ຢູ່ທີ່ ບ້ານ ໂພນສະຫວ່າງ ເໜືອ, ນະຄອນໄກສອບພົມວິຫານ ແຂວງ ສະຫວັນນະເຂດ ເປັນສູນວາງສະແດງສິນຄ້າຂະໜາດກາງ ມີເນື້ອທີ່ລວມປະມານ 16,000 ຕາແມັດ ມີສິນຄ້າຈຳໜ່າຍຫຼາຍກວ່າ 10,000 ລາຍການ.

✓ ຂໍ້ມູນທົ່ວໄປ ແລະ ຂໍ້ມູນສຳຄັນອື່ນໆ ຂອງບໍລິສັດ ປີ 2021

➢ ທີ່ຕັ້ງ ແລະ ເຄືອຂ່າຍ

ບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ ສຳນັກງານໃຫຍ່ຕັ້ງຢູ່: ເຮືອນເລກທີ 366, ບ້ານ ໂພນຕ້ອງ ສະຫວາດ, ເມືອງ ຈັນທະບູລີ, ນະຄອນຫຼວງວຽງຈັນ. ເຊິ່ງໃນປັດຈຸບັນປະກອບມີ 7 ສາຂາ ໃນນັ້ນຢູ່ ນະຄອນຫຼວງວຽງຈັນມີ 3 ສາຂາ ແລະ ອີກ 4 ສາຂາ ຢູ່ຕ່າງແຂວງ ໄດ້ແກ່:

1. ສາຂາໂພນຕ້ອງ ຕັ້ງຢູ່: ເລກທີ 366, ຖະໜົນໂພນຕ້ອງ, ບ້ານ ໂພນຕ້ອງສະຫວາດ, ເມືອງ ຈັນທະບູລີ, ນະຄອນຫຼວງວຽງຈັນ,
2. ສາຂາສາຂາສີໄຄ ຕັ້ງຢູ່: ຖະໜົນ 13 ເໜືອ, ບ້ານ ນາແຮ່, ເມືອງ ສີໂຄດຕະບອງ ນະຄອນຫຼວງວຽງຈັນ,
3. ສາຂາໂຊກໃຫຍ່ ຕັ້ງຢູ່: ຖະໜົນ 450, ບ້ານ ໂຊກໃຫຍ່, ເມືອງ ໄຊເສດຖາ, ນະຄອນຫຼວງວຽງຈັນ,
4. ສາຂາ ປາກຊັນ ຕັ້ງຢູ່: ຖະໜົນເລກທີ 13 ໃຕ້, ບ້ານ ສີສະອາດ, ເມືອງ ປາກຊັນ, ແຂວງ ບໍລິຄຳໄຊ,
5. ສາຂາ ປາກເຊ ຕັ້ງຢູ່: ຖະໜົນເລກທີ 38, ບ້ານ ກາງ, ນະຄອນປາກເຊ, ແຂວງ ຈຳປາສັກ,
6. ສາຂາ ທ່າແຂກ ຕັ້ງຢູ່: ຖະໜົນ 13 ເໜືອ, ບ້ານ ໂພນພິມ, ເມືອງ ທ່າແຂກ ແຂວງ ຄຳມ່ວນ,
7. ສາຂາ ສະຫວັນນະເຂດ ຕັ້ງຢູ່: ຖະໜົນ ເລກທີ 09, ບ້ານ ໂພນສະຫວ່າງເໜືອ, ນະຄອນ ໄກສອນພົມວິຫານ, ແຂວງ ສະຫວັນນະເຂດ.

➢ ຕິດຕໍ່ ແລະ ພົວພັນ ສອບຖາມຂໍ້ມູນຕ່າງໆຂອງບໍລິສັດ.

- ເບີໂທ: (+856-21) 415645
- Whatsapp: (+856-20) 96 935 223
- ອີເມວ: Souvanny@souvanny.la
- ເວັບໄຊ: www.souvanny.la

✓ ຂໍ້ມູນກ່ຽວກັບຫຼັກຊັບ ແລະ ຜູ້ຖືຮຸ້ນ 2021

➢ ທຶນຈົດທະບຽນ


ບໍລິສັດມີທຶນຈົດທະບຽນທັງໝົດ ນະວັນທີ 31 ທັນວາ 2021 ແມ່ນ 330.000.000.000 ກີບ ເປັນ ຮຸ້ນສາມັນຈຳນວນ 165.000.000 ຮຸ້ນ ມີມູນຄ່າໃນໃບຮຸ້ນລະ 2.000 ກີບ.

➢ ຜູ້ຖືຮຸ້ນ

ລາຍຊື່ຜູ້ຖືຮຸ້ນລາຍໃຫຍ່ ຂອງບໍລິສັດ ທີ່ຖືຮຸ້ນແຕ່ 5 ສ່ວນຮ້ອຍຂຶ້ນໄປ ໄດ້ແກ່:

1. ຄອບຄົວສຸຄະບັນດິດ ຈຳນວນຮຸ້ນທີ່ຖືຄອງແມ່ນ 83.893.600 ຮຸ້ນ (51%).
2. ບໍລິສັດ ໂກບອນເຮົ້າ ອິນເຕີເນຊັນແນວ ຈຳກັດ ຈຳນວນຮຸ້ນທີ່ຖືຄອງແມ່ນ 56.000.000 ຮຸ້ນ (33.94%)

- ✓ **ໂຄງຮ່າງການຈັດຕັ້ງສະພາບໍລິຫານ, ຄະນະອຳນວຍການ ແລະ ການເຄື່ອນໄຫວຂອງສະພາບໍລິຫານ/**
  - ➢ **ໂຄງຮ່າງການຈັດຕັ້ງພາຍໃນ ຂອງບໍລິສັດ**



➢ ຄະນະສະພາບໍລິຫານຂອງ ບໍລິສັດ ສຸວັນນີ ໂຮມເຊັ້ນເຕີ ມະຫາຊົນ



ທ່ານ ອຸ່ນ ຫຼ້າສຸກັນ
ປະທານສະພາບໍລິຫານ, ສະມາຊິກອິດສະຫຼະ



ທ່ານ ອານຸສອນ ອຸ່ນໄຕ
ຮອງປະທານສະພາບໍລິຫານ



ທ່ານ ວັດດານາ ສຸຄະບັນດິດ
ສະມາຊິກສະພາບໍລິຫານ, ຜູ້ອຳນວຍການໃຫຍ່



ທ່ານ ບຸນເຕີມ ກົມມິດຕະພາບ
ສະມາຊິກສະພາບໍລິຫານ, ສະມາຊິກອິດສະຫຼະ



ທ່ານ ພັນໂນລາ ສຸຄະບັນດິດ
ສະມາຊິກສະພາບໍລິຫານ, ຜູ້ອຳນວຍການໃຫຍ່ຝ່າຍການ



ທ່ານ ກິດສະດາ ສຸຄະບັນດິດ
ສະມາຊິກສະພາບໍລິຫານ/ຜູ້ອຳນວຍການໃຫຍ່ຝ່າຍປະຕິບັດ



ທ່ານ ປອ ໄຊພອນ ກອງມະນີລາ
ສະມາຊິກສະພາບໍລິຫານ, ສະມາຊິກອິດສະຫຼະ



ທ່ານ ນາງ ຊຸຕິການ ສີແສງຈັນ
ສະມາຊິກສະພາບໍລິຫານ



ທ່ານ ພິພົບ ວາດສະໜາອາຊາສະກຸນ
ສະມາຊິກສະພາບໍລິຫານ

➢ ຊີວະປະຫວັດໂດຍຫຍໍ້ ຂອງຄະນະສະພາບໍລິຫານ

ທ່ານທີ 01:



- ຊື່ ແລະ ນາມສະກຸນ : ທ່ານ ອຸ່ນ ຫຼ້າສຸກັນ:
- ຊັນຊາດ : ລາວ
- ວັນ/ເດືອນ/ປີເກີດ : 12/10/1950
- ສະຖານະພາບຄອບຄົວ : ແຕ່ງງານແລ້ວ
- ສາສະໜາ : ພຸດ

- ທີ່ຢູ່ປະຈຸບັນ : ບ້ານ ໜອງພະຍາ, ເມືອງ ໄຊທານີ, ນະຄອນຫຼວງວຽງຈັນ
- ຕຳແໜ່ງ : ປະທານສະພາບໍລິຫານ, ສະມາຊິກອົດສະຫຼະ
- ວຸດທິການສຶກສາ : ປະລິນຍາຕີ ຂະແໜງເສດຖະກິດ ແລະ ແຮງງານ ທີ່ ໂຮງຮຽນ ມະຫາວິທະຍາໄລກຳມະບານ,ຂະແໜງເສດຖະກິດແຮງງານ, ສາຫາ ລະນະລັດສັງຄົມນິຍົມ
- ປະຫວັດການເຮັດວຽກ : - ຫົວໜ້າຫ້ອງການ ອົງການໄອຍະການປະຊາຊົນສູງສຸດ;
  - ຮອງຫົວໜ້າ ອົງການຄຸ້ມຄອງທີ່ດິນແຫ່ງຊາດ;
  - ຜູ້ຊ່ວຍລັດຖະມົນຕີວ່າການ ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ

ທ່ານທີ02:



- ຊື່ ແລະ ນາມສະກຸນ : ທ່ານ ອານຸສອນ ອຸ່ນໄຕ
- ຊັນຊາດ : ລາວ
- ວັນ/ເດືອນ/ປີເກີດ : 01/01/1971
- ສະຖານະພາບຄອບຄົວ : ແຕ່ງງານແລ້ວ
- ສາສະໜາ : ພຸດ

- ທີ່ຢູ່ປະຈຸບັນ : ບ້ານ ໂພນສະຫວ່າງ, ເມືອງ ໄຊເສດຖາ, ນະຄອນຫຼວງວຽງຈັນ
- ຕຳແໜ່ງ : ຮອງປະທານສະພາບໍລິຫານ
- ວຸດທິການສຶກສາ : ປະລິນຍາໂທ ບໍລິຫານທຸລະກິດ ມະຫາວິທະຍາໄລແຫ່ງຊາດ ປີ 2017
- ປະຫວັດການເຮັດວຽກ ປະຈຸບັນ : ພະນັກງານ ຂອງ ບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ ແຕ່ປີ 1999-

ທ່ານທີ03:



- ຊື່ ແລະ ນາມສະກຸນ : ທ່ານ ອັດດານາ ສຸຄະບັນດິດ
- ຊັນຊາດ : ລາວ
- ວັນ/ເດືອນ/ປີເກີດ : 28/10/1966
- ສະຖານະພາບຄອບຄົວ : ແຕ່ງງານແລ້ວ
- ສາສະໜາ : ພຸດ
- ທີ່ຢູ່ປະຈຸບັນ : ບ້ານ ວຽງຈະເລີນ, ເມືອງ ໄຊເສດຖາ, ນະຄອນຫຼວງວຽງຈັນ
- ຕຳແໜ່ງ : ສະມາຊິກສະພາບໍລິຫານ, ຜູ້ອຳນວຍການໃຫຍ່
- ວຸດທິການສຶກສາ : ປະລິນຍາໂທ ບໍລິຫານທຸລະກິດ ມະຫາວິທະຍາໄລມະຫາສາຣະຄາມ, ປະເທດໄທ ປີ 2002
- ປະຫວັດການເຮັດວຽກ : ຜູ້ອຳນວຍການໃຫຍ່ ບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ ປີ 1988-ປະຈຸບັນ

ທ່ານທີ04:



- ຊື່ ແລະ ນາມສະກຸນ : ທ່ານ ບຸນເຕີມ ກົມມິດຕະພາບ
- ຊັນຊາດ : ລາວ
- ວັນ/ເດືອນ/ປີເກີດ : 03/03/1955
- ສະຖານະພາບຄອບຄົວ : ແຕ່ງງານແລ້ວ
- ສາສະໜາ : ພຸດ
- ທີ່ຢູ່ປະຈຸບັນ : ບ້ານ ໂພນສະອາດ, ເມືອງ ໄຊເສດຖາ, ນະຄອນຫຼວງວຽງຈັນ
- ຕຳແໜ່ງ : ສະມາຊິກສະພາບໍລິຫານ, ສະມາຊິກອົດສະຫຼະ
- ວຸດທິການສຶກສາ : ປະລິນຍາຕີ ດ້ານກົດໝາຍຍຸຕິທຳ ຈາກ ຄະນະນິຕິສາດ-ລັດຖະສາດມະຫາວິທະຍາໄລແຫ່ງຊາດລາວ ປີ 2011
- ປະຫວັດການເຮັດວຽກ : - ຮັບຜິດຊອບວຽກງານບໍລິຫານກະຊວງຍຸຕິທຳ ປີ 1982-1994
  - ຮັບຜິດຊອບວຽກງານການເງິນທີ່ຄະນະນິຕິສາດລັດຖະສາດ ປີ 1994-1997
  - ຫົວໜ້າພະແນກສັງລວມ-ກວດກາ ປີ 1999
  - ຜູ້ພິພາກສາຫົວໜ້າຄະນະສານ ປີ 1997-2015

ທ່ານທີ05:



- ຊື່ ແລະ ນາມສະກຸນ : ທ່ານ ພັນໂນລາ ສຸຄະບັນດິດ
- ຊັນຊາດ : ລາວ
- ວັນ/ເດືອນ/ປີເກີດ : 22/09/1969
- ສະຖານະພາບຄອບຄົວ : ແຕ່ງງານແລ້ວ
- ສາສະໜາ : ພຸດ
- ທີ່ຢູ່ປະຈຸບັນ : ບ້ານ ໂພນສະຫວັນເໜືອ, ເມືອງ ສີສັດຕະນາກ, ນະຄອນຫຼວງ ວຽງຈັນ
- ຕຳແໜ່ງ : ສະມາຊິກສະພາບໍລິຫານ, ຮອງຜູ້ອຳນວຍການໃຫຍ່, ຜູ້ອຳນວຍການໃຫຍ່ຝ່າຍການເງິນ
- ວຸດທິການສຶກສາ : ປະລິນຍາໂທ ບໍລິຫານທຸລະກິດ ມະຫາວິທະຍາໄລມະຫາສາຣະຄາມ, ປະເທດໄທ ປີ 2022
- ປະຫວັດການເຮັດວຽກ : ຮອງຜູ້ອຳນວຍການໃຫຍ່ ບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ ປີ 1988-ປະຈຸບັນ

ທ່ານທີ06:



- ຊື່ ແລະ ນາມສະກຸນ : ທ່ານ ກິດສະດາ ສຸຄະບັນດິດ
- ຊັນຊາດ : ລາວ
- ວັນ/ເດືອນ/ປີເກີດ : 04/01/1972
- ສະຖານະພາບຄອບຄົວ : ແຕ່ງງານແລ້ວ
- ສາສະໜາ : ພຸດ
- ທີ່ຢູ່ປະຈຸບັນ : ບ້ານ ໜອງໜ່ຽງ, ເມືອງ ໄຊເສດຖາ, ນະຄອນຫຼວງວຽງຈັນ
- ຕຳແໜ່ງ : ສະມາຊິກສະພາບໍລິຫານ, ຮອງຜູ້ອຳນວຍການໃຫຍ່, ຜູ້ອຳນວຍໃຫຍ່ຝ່າຍປະຕິບັດການ
- ວຸດທິການສຶກສາ : ປະລິນຍາໂທ ບໍລິຫານທຸລະກິດ ມະຫາວິທະຍາໄລ ຂອນແກ່ນ, ປະເທດໄທ ປີ 2007
- ປະຫວັດການເຮັດວຽກ : ຮອງຜູ້ອຳນວຍການໃຫຍ່ ບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ ປີ 2000-ປະຈຸບັນ

ທ່ານທີ07:



- ຊື່ ແລະ ນາມສະກຸນ : ທ່ານ ປອ ໄຊພອນ ກອງມະນີລາ
- ຊັນຊາດ : ລາວ
- ວັນ/ເດືອນ/ປີເກີດ : 30/12/1973
- ສະຖານະພາບຄອບຄົວ : ແຕ່ງງານແລ້ວ
- ສາສະໜາ : ພຸດ
- ທີ່ຢູ່ປະຈຸບັນ : ບ້ານ ນາສ້ຽວ, ເມືອງ ນາຊາຍທອງ, ນະຄອນຫຼວງວຽງຈັນ
- ຕຳແໜ່ງ : ສະມາຊິກສະພາບໍລິຫານ, ສະມາຊິກອິດສະຫຼະ
- ວຸດທິການສຶກສາ : ປະລິນຍາເອກ ບໍລິຫານທຸລະກິດ ມະຫາວິທະຍາໄລ ຮີໂຮຊິ່ມ່າ, ປະເທດຍີ່ປຸ່ນ ປີ 2009;
- ປະຫວັດການເຮັດວຽກ :
  - ວິຊາການ ບໍລິສັດ ລາວໂທລະຄົມ ປີ 1995-1997;
  - ຜູ້ກວດສອບພາຍໃນ ບໍລິສັດ ໄຮຄີ ແຄຄອມ ຈຳກັດ ປີ 2000-2011;
  - ຫົວໜ້າພະແນກການຕະຫລາດ ແລະ ປະຕິບັດການ ບໍລິສັດຄ້າຮຸ່ງ ໂຮດລາວ ປີ 2011;
  - ອາຈານສອນ ຄະນະເສດຖະສາດ ແລະ ບໍລິຫານທຸລະກິດ ມະຫາວິທະຍາໄລແຫ່ງຊາດ ປີ 2002-2011;
  - ຮອງຫົວໜ້າພາກວິຊາການບັນຊີ ຄະນະເສດຖະສາດ ແລະ ບໍລິຫານທຸລະກິດ ມະຫາວິທະຍາໄລແຫ່ງຊາດ ປີ 2011-2017;
  - ຫົວໜ້າພາກວິຊາການບັນຊີ ຄະນະເສດຖະສາດ ແລະ ບໍລິຫານທຸລະກິດ ມະຫາວິທະ ຍາໄລແຫ່ງຊາດ ປີ 2017- ປະຈຸບັນ.

ທ່ານທີ 08:



- ຊື່ ແລະ ນາມສະກຸນ : ນາງ ຊຸຕິການ ສີແສງຈັນ
- ຊັນຊາດ : ໄທ
- ວັນ/ເດືອນ/ປີເກີດ : 25/04/1969
- ສະຖານະພາບຄອບຄົວ : ໂສດ
- ສາສະໜາ : ພຸດ
- ທີ່ຢູ່ປະຈຸບັນ : ຣ້ອຍເອັດ, ປະເທດໄທ
- ຕຳແໜ່ງ : ສະມາຊິກສະພາບໍລິຫານ
- ວຸດທິການສຶກສາ : ປະລິນຍາໂທ ບໍລິຫານທຸລະກິດມະຫາບັນດິດ ມະຫາວິທະຍາໄລ ຂອນແກ່ນ, ປະເທດໄທ ປີ 2001
- ປະຫວັດການເຮັດວຽກ : - ຜູ້ກຳມະການບໍລິສັດ Siam Global House PCL ປີ 2008-2012
  - ຮອງປະທານເຈົ້າໜ້າ ທີ່ບໍລິຫານຝ່າຍບັນຊີແລະການເງິນ Siam Global House PCL ປີ 2012- ປະຈຸບັນ

ທ່ານທີ 09:



- ຊື່ ແລະ ນາມສະກຸນ : ທ່ານ ພິພິບ ອາດສະໜາອາຊາສະກຸນ
- ຊັນຊາດ : ໄທ
- ວັນ/ເດືອນ/ປີເກີດ : 21/05/1970
- ສະຖານະພາບຄອບຄົວ : ແຕ່ງງານແລ້ວ
- ສາສະໜາ : ພຸດ
- ທີ່ຢູ່ປະຈຸບັນ : ກຸງເທບ, ປະເທດໄທ
- ຕຳແໜ່ງ : ສະມາຊິກສະພາບໍລິຫານ
- ວຸດທິການສຶກສາ : ປະລິນຍາຕີ ມະນຸດສາດ ມະຫາວິທະຍາໄລກະເສດສາດ, ປະເທດໄທ ປີ 1993
- ປະຫວັດການເຮັດວຽກ :
  - ຜູ້ຊ່ວຍຮອງປະທານເຈົ້າໜ້າທີ່ບໍລິຫານຝ່າຍພັດທະນາທຸລະກິດ Siam Global House PCL ປີ 2014-2017
  - ຮອງປະທານເຈົ້າໜ້າທີ່ບໍລິຫານຝ່າຍພັດທະນາທຸລະກິດ Siam Global House PCL ປີ 2017-ປະຈຸບັນ

➢ ຄະນະຜູ້ອຳນວຍການໃຫຍ່ຂອງ ບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ.



ທ່ານ ວັດດານາ ສຸຄະບັນດິດ
ຜູ້ອຳນວຍການໃຫຍ່



ທ່ານ ພັນໂນລາ ສຸຄະບັນດິດ
ຮອງຜູ້ອຳນວຍການໃຫຍ່/
ຜູ້ອຳນວຍການໃຫຍ່ຝ່າຍການເງິນ.



ທ່ານ ກິດສະດາ ສຸຄະບັນດິດ
ຮອງຜູ້ອຳນວຍການໃຫຍ່/
ຜູ້ອຳນວຍການໃຫຍ່ຝ່າຍປະຕິບັດການ.

➢ ການເຄື່ອນໄຫວ ຂອງສະພາບໍລິຫານ ໃນປີ 2021

- ສະພາບໍລິຫານ ໄດ້ມີການຈັດກອງປະຊຸມສະພາບໍລິຫານຈຳນວນ 4 ຄັ້ງ
- ຄະນະກຳມະການກວດສອບ ໄດ້ມີການຈັດກອງປະຊຸມ ຈຳນວນ 4 ຄັ້ງ
- ຄະນະກຳມະການກຳນົດຄ່າຕອບແທນ ໄດ້ມີການຈັດກອງປະຊຸມ ຈຳນວນ 2 ຄັ້ງ
- ຄະນະກຳມະການຄຸ້ມຄອງຄວາມສ່ຽງ ໄດ້ມີການຈັດກອງປະຊຸມ ຈຳນວນ 2 ຄັ້ງ
- ຄະນະກຳມະການຄັດເລືອກ ໄດ້ມີການຈັດກອງປະຊຸມ ຈຳນວນ 2 ຄັ້ງ

➢ ຄ່າຕອບແທນ ຂອງສະມາຊິກສະພາບໍລິຫານ ແລະ ຄະນະອຳນວຍການ.

ສຳລັບສະມາຊິກສະພາບໍລິຫານສະເພາະທີ່ເປັນສະມາຊິກອິດສະຫຼະ ຈະມີຄ່າຕອບແທນເປັນເງິນອຸດໜູນ ເຂົ້າຮ່ວມກອງປະຊຸມໃນແຕ່ລະຄັ້ງໂດຍແບ່ງອອກຄື

- ປະທານສະພາບໍລິຫານ: 3,000,000 ກີບ/ຄັ້ງ
- ຮອງປະທານສະພາບໍລິຫານ: 2,000,000 ກີບ/ຄັ້ງ
- ສະມາຊິກສະພາບໍລິຫານ: 2,000,000 ກີບ/ຄັ້ງ

✓ ບົດລາຍງານດ້ານການເງິນ ຂອງບໍລິສັດ ປະຈຳປີ 2021

ບໍລິສັດ ສຸວັນນີ ໂຮມເຊັ້ນເຕີ ມະຫາຊົນ

ໃບລາຍງານສະຖານະການເງິນ
ວັນທີ 31 ທັນວາ 2021

	ບົດ ອະທິບາຍ	2021 ກີບ	2020 ກີບ
ຊັບສິນ			
ຊັບສິນໝຸນວຽນ			
ເງິນສົດ ແລະ ລາຍການທຽບເທົ່າເງິນສົດ	6	3.285.274.048	3.734.536.186
ໜີ້ຕ້ອງຮັບທາງການຄ້າ ແລະ ໜີ້ຕ້ອງຮັບອື່ນໆ, ສຸດທິ	7	12.497.867.185	11.221.223.619
ເຄື່ອງໃນສາງ, ສຸດທິ	8	289.175.467.358	244.475.544.506
ຊັບສິນໝຸນວຽນອື່ນໆ	9	7.159.850.423	7.373.681.890
ລວມຊັບສິນໝຸນວຽນ		**312.118.459.014**	**266.804.986.201**
ຊັບສິນບໍ່ໝຸນວຽນ			
ທີ່ດິນ, ອາຄານ ແລະ ອຸປະກອນ, ສຸດທິ	10	637.484.068.573	603.046.157.185
ຊັບສິນຄົງທີ່ບໍ່ມີຕົວຕົນ, ສຸດທິ	11	41.679.842	38.975.565
ລວມຊັບສິນບໍ່ໝຸນວຽນ		**637.525.748.415**	**603.085.132.750**
ລວມຊັບສິນ		**949.644.207.429**	**869.890.118.951**

ກະຊວງ ອຸດສາຫະກຳ ແລະ ການຄ້າ
ບໍລິສັດ ສຸວັນນີ ໂຮມເຊັ້ນເຕີ ມະຫາຊົນ
SOUVANNY HOME CENTER PUBLIC COMPANY

ວັດດານາ ສຸຄະບັນດິດ
ຜູ້ອຳນວຍການໃຫຍ່
ວັນທີ: 18 ກຸມພາ 2022

ພັນໂນລາ ສຸຄະບັນດິດ
ຜູ້ອຳນວຍການ ຝ່າຍການເງິນ
ວັນທີ: 18 ກຸມພາ 2022

ບົດອະທິບາຍຊ້ອນທ້າຍ ເອກະສານລາຍງານການເງິນ ແຕ່ໜ້າ 12 ເຖິງ 31 ເປັນສ່ວນໜຶ່ງຂອງເອກະສານລາຍງານການເງິນ

ບໍລິສັດ ສຸວັນນີ ໂຮມເຊັ້ນເຕີ ມະຫາຊົນ

ໃບລາຍງານສະຖານະການເງິນ
ວັນທີ 31 ທັນວາ 2021

	ບົດ ອະທິບາຍ	2021 ກີບ	2020 ກີບ
ໜີ້ສິນ			
ໜີ້ສິນໝຸນວຽນ			
ເງິນເບີກເກີນບັນຊີ ແລະ ເງິນກູ້ຢືມໄລຍະສັ້ນ	13	85.686.567.355	85.933.290.928
ໜີ້ຕ້ອງສົ່ງການຄ້າ ແລະ ໜີ້ຕ້ອງສົ່ງອື່ນໆ	12	59.803.233.466	43.605.028.476
ສ່ວນໝຸນວຽນຂອງເງິນໃຫ້ກູ້ຢືມໄລຍະຍາວ	13	13.820.250.486	9.068.667.781
ອາກອນກຳໄລ	14	4.066.651.565	740.792.797
ເງິນມັດຈຳຈາກລູກຄ້າ	15	2.129.487.607	1.130.450.932
ໜີ້ສິນໝຸນວຽນອື່ນໆ	16	14.747.214.631	16.545.347.976
ລວມໜີ້ສິນໝຸນວຽນ		**180.253.405.110**	**157.023.578.890**
ໜີ້ສິນບໍ່ໝຸນວຽນ			
ເງິນກູ້ຢືມໄລຍະຍາວຈາກສະຖາບັນການເງິນ	13	9.671.632.212	8.998.418.768
ລວມໜີ້ສິນບໍ່ໝຸນວຽນ		**9.671.632.212**	**8.998.418.768**
ລວມໜີ້ສິນ		**189.925.037.322**	**166.021.997.658**
ທຶນ			
ທຶນຈົດທະບຽນ			
ທຶນຈົດທະບຽນທີ່ໄດ້ຮັບອະນຸຍາດ			
ຮຸ້ນສາມັນ 165 ລ້ານຮຸ້ນ ມີມູນຄ່າໃນໃບຮຸ້ນລະ 2.000 ກີບ	17	330.000.000.000	330.000.000.000
ຮຸ້ນສາມັນທີ່ອອກແລ້ວ ແລະ ຈ່າຍແລ້ວ			
ຮຸ້ນສາມັນ 165 ລ້ານຮຸ້ນ ມີມູນຄ່າໃນໃບຮຸ້ນລະ 2.000 ກີບ		330.000.000.000	330.000.000.000
ສ່ວນເພີ່ມມູນຄ່າຮຸ້ນ		24.735.724.722	24.735.724.722
ກຳໄລສະສົມ			
ເງິນສຳຮອງຕາມກົດໝາຍ	18	8.440.875.640	5.973.926.973
ເງິນສຳຮອງອື່ນໆ	18	8.190.875.640	5.723.926.973
ກຳໄລລໍຖ້າແບ່ງປັນ		180.915.608.468	164.542.719.132
ຜົດຕ່າງຈາກການແປງຄ່າເອກະສານລາຍງານການເງິນ		207.436.085.637	172.891.823.493
ລວມທຶນ		**759.719.170.107**	**703.868.121.293**
ລວມໜີ້ສິນ ແລະ ທຶນ		**949.644.207.429**	**869.890.118.951**

ບໍລິສັດ ສຸວັນນີ ໂຮມເຊັ້ນເຕີ ມະຫາຊົນ SOUVANNY HOME CENTER PUBLIC COMPANY

ວັດດານາ ສຸຄະບັນດິດ
ຜູ້ອຳນວຍການໃຫຍ່
ວັນທີ: 18 ກຸມພາ 2022

ພັນໂນລາ ສຸຄະບັນດິດ
ຜູ້ອຳນວຍການ ຝ່າຍການເງິນ
ວັນທີ: 18 ກຸມພາ 2022

ບົດອະທິບາຍຊ້ອນທ້າຍ ເອກະສານລາຍງານການເງິນ ແຕ່ໜ້າ 12 ເຖິງ 31 ເປັນສ່ວນໜຶ່ງຂອງເອກະສານລາຍງານການເງິນ

ບໍລິສັດ ສຸວັນນີ ໂຮມເຊັ້ນເຕີ ມະຫາຊົນ

ໃບລາຍງານຫົນໄດ້ຮັບ
ສຳລັບສິ້ນສຸດ ວັນທີ 31 ທັນວາ 2021

	ບົດ ອະທິບາຍ	2021 ກີບ	2020 ກີບ
ລາຍໄດ້ຈາກການຂາຍ		455.188.800.941	396.712.890.643
ຕົ້ນທຶນໃນການຂາຍ	19	(358.083.962.107)	(326.144.236.331)
ກຳໄລລວມຂັ້ນຕົ້ນ		**97.104.838.834**	**70.568.654.312**
ລາຍຮັບອື່ນໆ		1.541.717.834	2.112.328.028
ລາຍຈ່າຍໃນການຂາຍ	19	(35.015.267.862)	(31.813.074.596)
ລາຍຈ່າຍບໍລິຫານ	19	(31.639.110.135)	(28.552.983.777)
ລາຍຈ່າຍການເງິນ		(4.989.577.589)	(4.684.273.425)
ກຳໄລ / (ຂາດທຶນ) ຈາກອັດຕາແລກປ່ຽນ, ສຸດທິ		1.610.145.798	5.076.201.776
ກຳໄລ ກ່ອນຈ່າຍອາກອນກຳໄລ		**28.612.746.880**	**12.706.852.318**
ອາກອນກຳໄລ	20	(3.943.260.210)	(697.394.936)
ກຳໄລສຸດທິ		**24.669.486.670**	**12.009.457.382**
ກຳໄລຕໍ່ຮຸ້ນ			
ກຳໄລພື້ນຖານຕໍ່ຮຸ້ນ		150	73

ບໍລິສັດ ສຸວັນນີ ໂຮມເຊັ້ນເຕີ ມະຫາຊົນ
SOUVANNY HOME CENTER PUBLIC COMPANY

ອັດທາມາ ສຸຄະບັນດິດ
ຜູ້ອຳນວຍການໃຫຍ່
ວັນທີ: 18 ກຸມພາ 2022

ພັນໃນລາ ສຸຄະບັນດິດ
ຜູ້ອຳນວຍການ-ຝ່າຍການເງິນ
ວັນທີ: 18 ກຸມພາ 2022

ບົດອະທິບາຍຂ້ອນທ້າຍ ເອກະສານລາຍງານການເງິນ ແຕ່ໜ້າ 12 ເຖິງ 31 ເປັນສ່ວນໜຶ່ງຂອງເອກະສານລາຍງານການເງິນ

ໃບລາຍງານສ່ວນປ່ຽນແປງທຶນ
ສຳລັບສິ້ນສຸດ ວັນທີ 31 ທັນວາ 2021

	ບິດ ອະທິບາຍ	ຮຸ້ນສາມັນທີ່ອອກ ແລະ ຈ່າຍແລ້ວ ກີບ	ສ່ວນເພີ່ມ ມູນຄ່າຮຸ້ນ ກີບ	ສຳຮອງເງິນ ຕາມກົດໝາຍ ກີບ	ສຳຮອງເງິນ ອື່ນໆ ກີບ	ກຳໄລສະສົມ ຍັງບໍ່ທັນແບ່ງປັນ ກີບ	ຜົດຕ່າງຈາກການແປງ ຄ່າເອກະສານລາຍ ງານການເງິນ ກີບ	ລວມ ກີບ
ຍອດຍົກມາ ວັນທີ 1 ມັງກອນ 2020		330.000.000.000	24.735.724.722	4.772.981.235	4.522.981.235	157.575.153.226	105.400.043.455	627.006.883.873
ສຳຮອງເງິນຕາມກົດໝາຍ		-	-	1.200.945.738	-	(1.200.945.738)	-	-
ສຳຮອງເງິນອື່ນໆ		-	-	-	1.200.945.738	(1.200.945.738)	-	-
ກຳໄລສຸດທິໃນປີ		-	-	-	-	12.009.457.382	-	12.009.457.382
ຈ່າຍເງິນປັນຜົນ	21	-	-	-	-	(2.640.000.000)	-	(2.640.000.000)
ຜົດຕ່າງຈາກການແປງຄ່າເອກະສານລາຍງານການເງິນ		-	-	-	-	-	67.491.780.038	67.491.780.038
ຍອດເຫຼືອໃນວັນທີ 31 ທັນວາ 2020		**330.000.000.000**	**24.735.724.722**	**5.973.926.973**	**5.723.926.973**	**164.542.719.132**	**172.891.823.493**	**703.868.121.293**
ຍອດຍົກມາ ວັນທີ 1 ມັງກອນ 2021		330.000.000.000	24.735.724.722	5.973.926.973	5.723.926.973	164.542.719.132	172.891.823.493	703.868.121.293
ສຳຮອງເງິນຕາມກົດໝາຍ		-	-	2.466.948.667	-	(2.466.948.667)	-	-
ສຳຮອງເງິນອື່ນໆ		-	-	-	2.466.948.667	(2.466.948.667)	-	-
ກຳໄລສຸດທິໃນປີ		-	-	-	-	24.669.486.670	-	24.669.486.670
ຈ່າຍເງິນປັນຜົນ	21	-	-	-	-	(3.362.700.000)	-	(3.362.700.000)
ຜົດຕ່າງຈາກການແປງຄ່າເອກະສານລາຍງານການເງິນ		-	-	-	-	-	34.544.262.144	34.544.262.144
ຍອດເຫຼືອໃນວັນທີ 31 ທັນວາ 2021		**330.000.000.000**	**24.735.724.722**	**8.440.875.640**	**8.190.875.640**	**180.915.608.468**	**207.436.085.637**	**759.719.170.107**

ບໍລິສັດ ສຸວັນນີ ໂຮມເຊັ້ນເຕີ ມະຫາຊົນ SOUVANNY HOME CENTER PUBLIC COMPANY

ອັດຕາ ສຸຄະບັນດິດ
ຜູ້ອຳນວຍການໃຫຍ່
ວັນທີ: 18 ກຸມພາ 2022

ພັນໃນລາ ສຸຄະບັນດິດ
ຜູ້ອຳນວຍການ ຝ່າຍການເງິນ
ວັນທີ: 18 ກຸມພາ 2022

ບິດອະທິບາຍຊ້ອນທ້າຍ ເອກະສານລາຍງານການເງິນ ແຕ່ໜ້າ 12 ເຖິງ 31 ເປັນສ່ວນໜຶ່ງຂອງເອກະສານລາຍງານການເງິນ

ບໍລິສັດ ສຸວັນນີ ໂຮມເຊັ້ນເຕີ ມະຫາຊົນ

ໃບລາຍງານ ກະແສເງິນສົດ
ສຳລັບສິ້ນສຸດ ວັນທີ 31 ທັນວາ 2021

	ບົດ ອະທິບາຍ	2021 ກີບ	2020 ກີບ
ກະແສເງິນສົດ ຈາກກິດຈະກຳການດຳເນີນງານ:			
ກຳໄລສຸດທິກ່ອນອາກອນກຳໄລສຳລັບປີ		28.612.746.880	12.706.852.318
ການດັດແກ້:			
ຄ່າຫຼ້ຍຫ້ຽນ	10	18.280.657.823	16.947.511.588
ການຕັດຈ່າຍ	11	26.848.512	43.159.625
(ກຳໄລ) / ຂາດທຶນຈາກການຂາຍທີ່ດິນ, ອາຄານ ແລະ ອຸປະກອນ		(26.915.457)	(11.657.267)
(ກຳໄລ) / ຂາດທຶນຈາກອັດຕາແລກປ່ຽນ		(507.670.338)	(3.545.406.395)
ລາຍຈ່າຍດອກເບ້ຍ		4.989.577.589	4.684.286.868
ສຳຮອງເງິນແຮເຄື່ອງໃນສາງເຄື່ອນໄຫວຊ້ຳ ແລະ ລ້າສະໄໝ		73.117.833	39.528.134
ສຳຮອງເງິນແຮໜີ້ຕ້ອງຮັບຈາກລູກຄ້າ ແລະ ໜີ້ຕ້ອງຮັບອື່ນໆ		588.643.401	374.657.127
ສຳຮອງສຳລັບສົ່ງຄືນການຂາຍຂອງໜີ້ຕ້ອງຮັບ		130.957.064	102.605.704
ກຳໄລຈາກການດຳເນີນງານກ່ອນການປ່ຽນແປງຂອງທຶນໝຸນວຽນ		52.167.963.307	31.341.537.702
ການປ່ຽນແປງຈາກ ການດຳເນີນງານຂອງເງິນທຶນໝຸນວຽນ			
- ໜີ້ຕ້ອງຮັບຈາກລູກຄ້າ ແລະ ໜີ້ຕ້ອງຮັບອື່ນໆ		(1.454.749.302)	6.258.775.324
- ເຄື່ອງໃນສາງ		(32.972.704.626)	(14.988.004.227)
- ຊັບສິນໝຸນວຽນອື່ນໆ		569.744.061	1.625.047.249
- ໜີ້ຕ້ອງສົ່ງການຄ້າ ແລະ ໜີ້ຕ້ອງສົ່ງອື່ນໆ		12.501.743.628	(6.172.300.403)
- ເງິນມັດຈຳຈາກລູກຄ້າ		944.472.113	155.415.983
- ໜີ້ສິນໝຸນວຽນອື່ນໆ		(2.756.303.782)	(3.692.671.662)
ກະແສເງິນສົດໃຊ້ຈາກການດຳເນີນງານ		29.000.165.399	14.527.799.966
ຈ່າຍດອກເບ້ຍ		(4.830.017.364)	(4.643.196.115)
ຈ່າຍອາກອນກຳໄລ	14	(699.384.936)	(325.885.700)
ເງິນສົດສຸດທິ ໃຊ້ໄປສຳລັບກິດຈະກຳ ການດຳເນີນງານ		23.470.763.099	9.558.718.151
ກະແສເງິນສົດ ຈາກກິດຈະກຳ ການລົງທຶນ:			
ຊື້ຊັບສິນບັດຄົງທີ		(22.689.529.359)	(11.051.303.440)
ຊື້ຊັບສິນບໍ່ມີຕົວຕົນ		(28.511.654)	(7.960.427)
ຮັບເງິນຈາກການຂາຍທີ່ດິນ, ອາຄານ ແລະ ອຸປະກອນ		125.517.385	140.789.700
ເງິນສົດສຸດທິ ໃຊ້ໄປກິດຈະກຳໃນການລົງທຶນ		(22.592.523.628)	(10.918.474.167)

ວັດດານາ ສຸຄະບັນດິດ
ຜູ້ອຳນວຍການໃຫຍ່
ວັນທີ: 18 ກຸມພາ 2022

ພັນໂນລາ ສຸຄະບັນດິດ
ຜູ້ອຳນວຍການ ຝ່າຍການເງິນ
ວັນທີ: 18 ກຸມພາ 2022

ບົດອະທິບາຍຊ້ອນທ້າຍ ເອກະສານລາຍງານການເງິນ ແຕ່ໜ້າ 12 ເຖິງ 31 ເປັນສ່ວນໜຶ່ງຂອງເອກະສານລາຍງານການເງິນ

ບໍລິສັດ ສຸວັນນີ ໂຮມເຊັ້ນເຕີ ມະຫາຊົນ

ໃບລາຍງານ ກະແສເງິນສົດ
ສຳລັບສິ້ນສຸດ ວັນທີ 31 ທັນວາ 2021

	ປີດ ອະທິບາຍ	2021 ກີບ	2020 ກີບ
ກະແສເງິນສົດຈາກກິດຈະກຳການເງິນ:			
ຮັບເງິນກູ້ຢືມຈາກທະນາຄານ		405.638.543.748	373.688.462.850
ການຊຳລະຄືນຂອງເງິນກູ້ຢືມຈາກທະນາຄານ		(405.480.357.342)	(374.492.428.216)
ຈ່າຍເງິນປັນຜົນ	21	(3.362.700.000)	(2.640.000.000)
ເງິນສົດສຸດທິຈາກກິດຈະກຳທາງການເງິນ		(3.204.513.594)	(3.443.965.366)
ຫຼຸດລົງສຸດທິໃນເງິນສົດ ແລະ ລາຍການທຽບເທົ່າເງິນສົດ		(2.326.284.123)	(4.803.721.382)
ເງິນສົດ ແລະ ລາຍການທຽບເທົ່າເງິນສົດໃນຕົ້ນປີ	6	3.734.536.186	3.740.207.940
ຜົນຂອງອັດຕາແລກປ່ຽນເງິນສົດ ແລະ ລາຍການທຽບເທົ່າເງິນສົດ		1.877.021.985	4.798.049.628
ເງິນສົດ ແລະ ລາຍການທຽບເທົ່າເງິນສົດ		**3.285.274.048**	**3.734.536.186**
ລາຍການປ່ຽນແປງເງິນສົດ			
ໜີ້ຕ້ອງສົ່ງອື່ນໆຈາກການຊື້ຊັບສິນຄົງທີ		1.591.866.396	554.738.341
ດອກເບ້ຍຄ້າງຊຳລະ		159.560.225	41.090.752

ອັດດານາ ສຸຄະບັນດິດ
ຜູ້ອຳນວຍການໃຫຍ່
ວັນທີ: 18 ກຸມພາ 2022

ພັນໂນລາ ສຸຄະບັນດິດ
ຜູ້ອຳນວຍການ ຝ່າຍການເງິນ
ວັນທີ: 18 ກຸມພາ 2022

ປີດອະທິບາຍຊ້ອນທ້າຍ ເອກະສານລາຍງານການເງິນ ແຕ່ໜ້າ 12 ເຖິງ 31 ເປັນສ່ວນໜຶ່ງຂອງເອກະສານລາຍງານການເງິນ

✓ **ຄ່າບໍລິການກວດສອບບັນຊີ ແລະ ຄ່າບໍລິການອື່ນໆ ໃນປີ 2021**

ບໍລິສັດ ພຣາຍສ໌ວໍເຕີ້ເຮົ້າສ໌ກູເປີ້ສ (ລາວ) ຈຳກັດຜູ້ດຽວ (PriceWaterHouseCoopers (Lao) Sole Co., Ltd.) ເປັນຜູ້ກວດສອບບັນຊີພາຍນອກຂອງບໍລິສັດ ສະເພາະປະຈຳປີ 2021 ໂດຍມີຄ່າບໍລິການເປັນເງິນຈຳນວນເງິນ **36,500** ໂດລາສະຫະລັດ.

✓ **ຄວາມຮັບຜິດຊອບຕໍ່ສັງຄົມ ປີ 2021**

➢ **ການມອບພັນທະອາກອນ ປີ 2021**

ບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ ໄດ້ປະຕິບັດຢູ່ພາຍໃຕ້ກົດໝາຍຂອງ ສປປລາວ ໂດຍສະເພາະກົດໝາຍສ່ວຍສາອາກອນຢ່າງເຂັ້ມງວດເຫັນໄດ້ຈາກການປະຕິບັດພັນທະມອບອາກອນໃຫ້ລັດເຊັ່ນ: ອາກອນມູນຄ່າເພີ່ມ, ອາກອນເງິນເດືອນ, ອາກອນກຳໄລ ເປັນຕົ້ນ.

ການມອບພັນທະອາກອນໃຫ້ລັດ ປະຈຳປີ 2021

ລຳດັບ	ລາຍການ	ລວມມູນຄ່າ (ກີບ)
1	ພາສີນຳເຂົ້າ	2.561.905.846
2	ອາກອນມູນຄ່າເພີ່ມ	46.972.602.52
3	ອາກອນຊົມໃຊ້	4.200
4	ອາກອນເງິນເດືອນ	963.666.518
5	ອາກອນກຳໄລ	709.394.936
	ລວມ	**51.207.574.026**

➢ **ການອຸປະຖຳ ແລະ ຊ່ວຍເຫຼືອສັງຄົມ ປີ 2021**

ໃນປີ 2021 ທີ່ຜ່ານມາ ບໍລິສັດ ສຸວັນນີ ໂຮມເຊັນເຕີ ມາຫາຊົນ ໂດຍປະຕິບັດຕາມ ນະໂຍບາຍ ຂອງ ອົງກອນ ທີ່ມີຄວາມຮັບຜິດຊອບ ຕໍ່ສັງຄົມ ບໍລິສັດ ໄດ້ໃຫ້ການຊ່ວຍເຫຼືອສັງຄົມ ຫຼາຍກວ່າ 40ໂຄງການ ທົ່ວປະເທດ ແລະ ລວມມູນຄ່າຫຼາຍກວ່າ **339** ລ້ານກີບ ໂດຍຜ່ານໂຄງການ: ສ້າງຮ້ອຍຍິ້ມ ດ້ວຍການແບ່ງປັນ ໂດຍມີລາຍລະອຽດດັ່ງນີ້;

- **ການຊ່ວຍເຫຼືອດ້ານການສຶກສາ, ກິລາ ແລະ ສິນລະປະ ປີ 2021**
  - ວັນທີ 05 ມັງກອນ 2021 ມອບສີທາພາຍໃນ ຈຳນວນ 10ຖັງ ໃຫ້ແກ່ ມະຫາວິທະຍາໄລແຫ່ງຊາດ ຄະນະວິທະຍາສາດສິ່ງແວດລ້ອມ ເພື່ອນຳໄປບູລະນະ ໂຮງຮຽນປະຖົມ ສົມບູນ ບ້ານ ເກົ່ານ ໃຕ້ ເມືອງ ທຸລະຄົມ ແຂວງ ວຽງຈັນ
  - ວັນທີ 15 ມີນາ 2021 ອຸປະຖຳສີ ແລະ ອຸປະກອນ ເພື່ອຊ່ວຍເຫຼືອ ໂຮງຮຽນ ປະຖົມ - ມັດທະຍົມຕອນຕົ້ນ 489 ໃຫ້ແກ່ ມູນລະນິທິກູ້ໄພ 1623 (ບ້ານ ຊຸດສາມບາດ, ເມືອງ ໄຊທານີ, ນະຄອນຫຼວງວຽງຈັນ)
  - ວັນທີ 12 ເມສາ 2021 ອຸປະຖຳທຶນການສຶກສາ ໃຫ້ແກ່ ບຸກຄົນໂອທິສຕິກ ຜ່ານ ສະມາຄົມ ເພື່ອຄົນໂອທິສຕິກ ບ້ານ ໂພນສະອາດ, ເມືອງສີສັດຕະນາກ, ນະຄອນຫຼວງວຽງຈັນ

- ວັນທີ 13 ພຶດສະພາ 2021 ມອບເງິນຊ່ວຍເຫຼືອ ແລະ ອຸປະກອນ ກໍ່ສ້າງຮົ້ວ ໂຮງຮຽນ ປະຖົມສົມບູນ ບ້ານ ໂພນ ພິມ ເມືອງ ທ່າແຂກ ແຂວງ ຄຳມ່ວນ ແລະ ອື່ນໆ







- **ການຊ່ວຍເຫຼືອດ້ານສຸຂະພາບ ປີ2021**
  - **17 ກຸມພາ 2021** ບໍລິຈາກເລືອດໃຫ້ອົງການກາແດງ ແຂວງຈຳປາສັກ, ແຂວງ ບໍລິຄຳໄຊ ແລະ ນະຄອນຫຼວງວຽງ ຈັນ ລວມທັງໝົດໄດ້ 80ຖົງ ເພື່ອ ແລະ ວັນທີ **14 ກໍລະກົດ 2021** ບໍລິຈາກເລືອດ ໃຫ້ອົງການກາແດງ ເພື່ອ ຕ້ອນຮັບວັນສ້າງຕັ້ງແມ່ຍິງລາວ ຄົບຮອບ 66 ປີ ລວມທັງໝົດ 77 ຖົງ ແລະ ລວມທັງໝົດ **157ຖົງ** ໃນປີ 2021





  - ວັນທີ 10 ມີນາ 2021 ອຸປະຖຳເງິນ ເພື່ອຊື້ພາຫະນະ ປະເພດລົດຈັກ ເພື່ອນຳໃຊ້ໃນວຽກງານປ້ອງກັນຄວາມ ສະຫງົບ, ຕ້ານ ແລະ ສະກັດກັ້ນການແຜ່ລະບາດ ຂອງພະຍາດ COVID-19 (ດ່ານ ຕມ ວັງເຕົ່າ)
  - ວັນທີ 27 ເສມາ 2021 ມອບເງິນຊ່ວຍເຫຼືອ ເພື່ອຕ້ານພະຍາດໂຄວິດ -19 ໃຫ້ແກ່ ຫ້ອງວ່າການນະຄອນຫຼວງ ວຽງຈັນ ມູນຄ່າ 120,000,000 ກີບ
  - ວັນທີ 27 ເມສາ 2021 ມອບນ້ຳຊ່ວຍເຫຼືອໃຫ້ ໂຮງໝໍໃນນະຄອນຫຼວງວຽງຈັນ (ໂຮງໝໍ ມິດຕະພາບ, ໂຮງໝໍ ເມືອງ ໄຊເສດຖາ, ເມືອງ ສີໂຄດຕະບອງ, ເມືອງ ຈັນທະບູລີ) ແລະ ໂຮງໝໍ ແຂວງ ບໍລິຄຳໄຊ ແລະ ແຂວງຄຳ ມ່ວນ ເພື່ອເສີມສ້າງກຳລັງໃຈໃຫ້ກັບພະນັກງານແພດໝໍ ໃນການຕ້ານ ແລະ ສະກັດກັ້ນ ເຊື້ອພະຍາດໂຄວິດ -19 ລວມມູນຄ່າ 10,320,000ກີບ
  - ວັນທີ 06/05/2021 ຮ່ວມ ກັບບໍລິສັດ ທຳມະສອນ ສະໜັບສະໜູນຖັງນ້ຳ DOS ໃຫ້ໂຮງໝໍສະໜາມ ປ້ອ ພະຍາດ COVID-19 ທີ່ສູນກິລາໃນຮົ່ມ ລ້ານຊ້າງ ລວມມູນຄ່າ 7,500,000 ກີບ

- 13 ກັນຍາ 2021 ອຸປະຖຳ ຕຽງພັບໃສ່ຄົນເຈັບ ເພື່ອຄວາມສະດວກໃນການເຄື່ອນຍ້າຍຄົນເຈັບຂຶ້ນ-ລົງລິດ ໃຫ້ແກ່ມູນນິທິ ແມ່ກ້ໄພ ນ້ຳສອງສີ ບ້ານ ນ້ຳສິ້ມ ເມືອງ ປາກຊັນ ແຂວງ ບໍລິຄຳໄຊ ລວມມູນຄ່າ 12,800,000ກີບ
- ວັນທີ 24 ກັນຍາ 2021 ມອບເງິນຊຸກຍູ້ ແກ່ວຽກງານສະກັດກັ້ນ ແລະ ປ້ອງກັນການລະບາດເຊື້ອພະຍາດ covid-19 ໃຫ້ ແຂວງ ຄຳມ່ວນ ແລະ ແຂວງ ຈຳປາສັກ ລວມມູນຄ່າ 50,000,000ກີບ



- **ການຊ່ວຍເຫຼືອແບບອຸປະຖຳ ປີ2021**
  - ວັນທີ 06 ມັງກອນ 20201 ສະໜັບສະໜູນ ກອນອວຍພອນ ວັນສ້າງຕັ້ງກອງທັບ 20 ມັງກອນ ຄົບຮອບ 72ປີ ທາງໂທລະພາບແຫ່ງຊາດລາວ
  - ວັນທີ 04 ມີນາ 2021 ສະໜັບສະໜູນ ອວຍພອນວັນແມ່ຍິງສາກົນ ໜັງສືພິມປະເທດລາວ
  - ວັນທີ 18-25 ມີນາ 2021 ສະໜັບສະໜູນ ອວຍພອນວັນສ້າງຕັ້ງພັກປະຊາຊົນປະຕິວັດລາວ ຄົບຮອບ 66 ປີ ທາງໂທລະພາບແຫ່ງຊາດລາວ
  - ວັນທີ 17 ມີນາ 2021 ສະໜັບສະໜູນ ອວຍພອນວັນສ້າງຕັ້ງພັກປະຊາຊົນປະຕິວັດລາວ ວັນທີ 22 ມີນາ ຄົບຮອບ 66 ປີ ບົດກອນ ຜ່ານ ໜັງສືພິມປະເທດລາວ
  - ວັນທີ 09 ເສມາ 2021 ສະໜັບສະໜູນ ອວຍພອນປີໃໝ່ລາວ ພສ 2564 ຜ່ານບົດກອນລົງໂທລະພາບ

✓ ນະໂຍບາຍການຄຸ້ມຄອງພາຍໃນ ປີ 2021

ບໍລິສັດ ມີນະໂຍບາຍໃນການຄຸ້ມຄອງພາຍໃນໂດຍໃຊ້ມາດຕະຖານການບໍລິຫານຈັດການພາຍໃຕ້ລະບົບ ISO 9001 Version 2015 ແລະ ຍັງຄອບຄຸມດ້ວຍມາດຕະຖານຮ້ານແລະມາດຕະຖານການບໍລິການຕ່າງໆ ພ້ອມນີ້ກໍ່ມີການຄອບຄຸມໂດຍລະບົບຄອມພິວເຕີ ນຳໃຊ້ Software ທີ່ມີປະສິດທິພາບ ເພື່ອການຄຸ້ມຄອງ, ມີການ ຂໍອະນຸມັດ ຕາມຂັ້ນຕອນຂອງລະບົບ ພາຍໃຕ້ການກວດສອບຂອງທີມງານກວດສອບພາຍໃນແລະທີມງານກວດ ສອບພາຍນອກ ພ້ອມເສີມດ້ວຍລະບົບກ້ອງວົງຈອນປິດເພື່ອກວດກາຄວບຄຸມຈຸດບົກຜ່ອງຕ່າງໆ

✓ ນະໂຍບາຍຄຸ້ມຄອງຄວາມສ່ຽງ ປີ 2021

ທຸລະກິດການຄ້າວັດສະດຸກໍ່ສ້າງໃນລາວມີປັດໃຈຄວາມສ່ຽງຫຼັກໃນປີຜ່ານມາຄື:

1. ພາລະໜີ້ສິນຂອງລູກຄ້າ
2. ອັດຕາແລກປ່ຽນ
3. ພາວະໂລກລະບາດ
4. ໄພຕ່າງໆ

ເຊິ່ງພວກເຮົາໄດ້ ບໍລິຫານຄວາມສ່ຽງຕ່າງໆ ໂດຍໃຊ້ກົນໄກການອະນຸມັດຕ່າງໆ ມີການພິຈາລະນາ ແລະ ກຳນົດວົງເງິນ ໃຫ້ບໍລິສັດ ແລະ ລູກຄ້າ, ທາງດ້ານອັດຕາແລກປ່ຽນແມ່ນ ເນື່ອງຈາກ ບໍລິສັດນຳເຂົ້າ ໂດຍຖືກຕ້ອງຕາມກົດໝາຍ ຈຶ່ງ ສາມາດຊື້ເງິນຕາຈາກທະນາຄານໄດ້, ດ້ວຍພາລະໂລກລະບາດ ແມ່ນມີມາດຕະການທາງລະບົບການຂາຍ online ແລະ ທາງ offline ແມ່ນມີມາດຕະຖານຮັກສາໄລຍະຫ່າງ ຂອງລູກຄ້າ ໃສ່ໜ້າກາກ, ວັດແທກອຸ່ນນະພູມ ແລະ ມີເຢລ້າງມື ທຸກຄັ້ງກ່ອນ ແລະ ຫລັງບໍລິການ ແລະ ດ້ານໄພຕ່າງໆເຊັ່ນ: ນ້ຳຖ້ວມ, ໄຟໄໝ້, ພາຍຸ ແລະ ແຜ່ນດິນໄຫວເຫຼົ່ານີ້ເປັນຕົ້ນ ພວກເຮົາໄດ້ມີການຊື້ປະກັນໄພໄວ້ໃນແຕ່ລະສາຂາ ເພື່ອຮອງຮັບທຸກສະຖານະການ ທີ່ຈະເກີດຂຶ້ນ.

✓ ແຜນດຳເນີນງານປະຈຳປີ 2022

➢ ແຜນດ້ານວຽກງານການຂາຍ ແລະ ການເງິນໃນປີ 2022

ໃນປີ 2022 ບໍລິສັດຕັ້ງເປົ້າໝາຍຍອດຂາຍໃຫ້ເຕີບໂຕທີ 10% ເມື່ອທຽບກັບປີທີ່ຜ່ານມາ ທັງນີ້ຈາກການປະເມີນໃນເລື່ອງປັດໃຈສະພາບແວດລ້ອມທັງພາຍໃນ ແລະ ພາຍນອກ ທີ່ຍັງມີຄວາມບໍ່ແນ່ນອນສູງຈາກພາວະເສດຖະກິດໂລກ, ໂລກລະບາດ ແລະ ກຳລັງສັ່ງຊື້ທີ່ລົດລົງ, ເພື່ອໃຫ້ບັນລຸເປົ້າໝາຍດັ່ງກ່າວບໍລິສັດໄດ້ວາງແຜນປະຕິບັດດັ່ງນີ້:

- ສັນຫາສິນຄ້າໃໝ່ ທີ່ມີຄຸນນະພາບ ແລະ ຕອບໂຈດລູກຄ້າແຕ່ລະລະດັບ (Segment) ຫລາຍຂຶ້ນ ເພື່ອເພີ່ມຍອດຂາຍ.
- ສັນຫາສິນຄ້າຈາກໂຮງງານ ທີ່ມີຕົ້ນທຶນຖືກ ແລະ ມີຟອມ D ແລະ E ເພື່ອລົດຕົ້ນທຶນໃຫ້ຕ່ຳລົງ.
- ພັດທະນາການຕິດຕັ້ງ ແລະ ບໍລິການຫຼັງການຂາຍໃຫ້ມີປະສິດທິພາບຂຶ້ນ.
- ປະສານທັງ 3 ຊ່ອງທາງການຂາຍຫຼັກຄື: ລູກຄ້າທົ່ວໄປ, ລູກຄ້າໂຄງການ ແລະ ລູກຄ້າຮ້ານຄ້າ ແລະ ສຶກສາຄວາມຕ້ອງການ ຂອງລູກຄ້າໃນແຕ່ລະລະດັບ (Segment) ເພື່ອເພີ່ມຍອດຂາຍ.
- ປະສານການຂາຍທັງ Offline ແລະ Online ເຂົ້າກັນ ປະຈຸບັນມີການພັດທະນາລະບົບການປະສານງານທັງການຂາຍ Offline ແລະ Online ເຂົ້າກັນ ເພື່ອເພີ່ມຍອດຂາຍໃຫ້ຫຼາຍຂຶ້ນ.
- ພັດທະນາການສົ່ງມອບສິນຄ້າໃຫ້ລູກຄ້າໃຫ້ຖືກຕ້ອງ ແລະ ໄວຂຶ້ນ.

➢ ແຜນດ້ານວຽກງານການຕະຫຼາດ (ລູກຄ້າ)ໃນປີ 2022

ເພື່ອໃຫ້ບັນລຸເປົ້າໝາຍການຂະຫຍາຍໂຕດັ່ງກ່າວ ທັງເປັນການສ້າງພື້ນຖານໄລຍະຍາວ ພວກເຮົາໄດ້ມີການວາງແຜນການຕະຫລາດດັ່ງນີ້:

- ສ້າງການຈົດຈຳແບຣນ **"ສຸວັນນີ"** ຫຼາຍຂຶ້ນຜ່ານຮູບແບບ ຂອງການໂຄສະນາຕາມປ້າຍສາທາລະນະ, ສື່ໂຄສະນາທາງ Online ແລະ Offline ອື່ນໆ.
- ໂຄສະນາຄຸນນະພາບສິນຄ້າ ແລະ ຄຸນປະໂຫຍດສິນຄ້າຜ່ານທາງ Online ແລະ Offline ຫຼາຍຂຶ້ນ.
- ສົ່ງເສີມການຊ່ວຍເຫລືອສັງຄົມ ຜ່ານໂຄງການ "ສ້າງຮອຍຍິ້ມ ດ້ວຍການແບ່ງປັນ" ຊ່ວຍເຫລືອໂຮງຮຽນ, ໂຮງໝໍ, ການບໍລິຈາກເລືອດ, ອຸປະກອນກິລາ ແລະ ການສຶກສາ ໃນເຂດຫ່າງໄກສອກຫລີກ ແລະ ຊ່ວຍບັນເທົາໄພພິບັດຕ່າງໆ.
- ສຳຫລວດຄວາມເພິ່ງພໍໃຈ ຂອງລູກຄ້າ ແລະ ສຶກສາຄວາມຕ້ອງການ ຂອງລູກຄ້າກຸ່ມເປົ້າໝາຍ ເພື່ອປັບປຸງແກ້ໄຂຂໍ້ບົກຜ່ອງ ແລະ ສົ່ງເສີມຈຸດແຂງ ຂອງບໍລິສັດໃຫ້ດີຂຶ້ນ.
- ສ້າງ Platform ແລະ ຈັດທຳສື່ໂຄສະນາຜ່ານທາງ Online ແລະ Offline ເພື່ອສື່ສານການຕະຫລາດໄປສູ່ກຸ່ມລູກຄ້າເປົ້າໝາຍໃນແຕ່ລະທ້ອງຖິ່ນ.
- ຈັດທຳໂປໂມຊັ່ນສິນຄ້າໄປສູ່ແຕ່ລະກຸ່ມລູກຄ້າເປົ້າໝາຍ ເພື່ອກະຕຸ້ນຍອດຂາຍ.

- **ແຜນວຽກງານດ້ານ ການພັດທະນາການຈັດການ ປີ 2022**
  - ສືບຕໍ່ປັບປຸງມາດຕະຖານຮ້ານ, ມາດຕະຖານການບໍລິການ ແລະ ການຈັດວາງສິນຄ້າໃໝ່ໃຫ້ຕອບໂຈດລູກຄ້າຫລາຍຂຶ້ນ.
  - ສືບຕໍ່ຮັກສາມາດຕະຖານ ISO 9001 VERSION-2015 ໃຫ້ດີຂຶ້ນ.
  - ນຳໃຊ້ ໄອທີ ເຂົ້າສູ່ລະບົບການຈັດການຫລາຍຂຶ້ນຜ່ານການຂຽນ Application ຕ່າງໆ.
- **ແຜນດ້ານວຽກງານບຸກຄະລາກອນໃນປີ 2022**
  - ພັດທະນາ ແລະ ຝຶກອົບຮົມພະນັກງານໃນການນຳໃຊ້ມາດຕະຖານລະບົບ ISO 9001 Version 2015 ທີ່ປັບປຸງໃໝ່, ທັກສະການແກ້ໄຂບັນຫາ ແລະ ການຕັດສິນໃຈຢ່າງເປັນລະບົບ.
  - ຈັດຫລັກສູດຝຶກອົບຮົມທັກສະຕ່າງໆ ທັງການຝຶກອົບຮົມພາຍໃນ ແລະ ພາຍນອກຢ່າງເປັນລະບົບ ແລະ ຈັດອັນດັບຄວາມສາມາດ ຂອງພະນັກງານ ເພື່ອເພີ່ມສັກກະຍະພາບ ຂອງພະນັກງານເອງ ເພີ່ມຄວາມກ້າວໜ້າໃຫ້ພະນັກງານ ໃນການມີຕຳແໜ່ງຄວາມຮັບຜິດຊອບທີ່ສູງຂຶ້ນ.
  - ປັບປຸງໂຄງສ້າງອົງກອນໃຫ້ມີຄວາມສອດຄ່ອງກັບການປ່ຽນແປງ ຂອງຮູບແບບທຸລະກິດ ແລະ ການປ່ຽນແປງພຶດຕິກຳ ຂອງລູກຄ້າ ພັດທະນາຄົນໃຫ້ມີຄວາມເຂົ້າໃຈການປະສານງານຕາມໂຄງສ້າງໃໝ່ ຕາມການປ່ຽນແປງ ຂອງກຸ່ມລູກຄ້າໃນຕະຫລາດ.
- **ແຜນການລົງທຶນ ແລະ ຂະຫຍາຍກິດຈະການ ໃນປີ 2022**
  - ສືບຕໍ່ສຶກສາຂໍ້ມູນການກໍ່ສ້າງພື້ນຖານສາງສິນຄ້າ ຕາມແຫລວເສັ້ນທາງລົດໄຟລາວ-ຈີນ.
  - ຂະຫຍາຍສາຂາໃໝ່ ຈຳນວນ 4 ສາຂາ ເລີ່ມແຕ່ ປີ 2022 ຫາ ປີ 2025.

ເປັນສີສັນ ແບ່ງປັນໂອກາດ
ແລະ ຄວາມສຸກສູ່ສັງຄົມ



















ສຸວັນນີ ໂຮມເຊັນເຕີ ມະຫາຊົນ
SOUVANNY HOME CENTER PUBLIC COMPANY
PHONETONGSAVAT RD, BAN PHONETONGSAVAT, CHANTHABULY DISTRICT, VIENTIANE CAPITAL
OFFICE TEL: (+856-21) 415645, FAX/TEL: (+856-21) 262984, WWW.SOUVANNY.LA